CONTACT

ຄວາມສໍ້ມພັ້ນ

MAGAZINE FRANCO-LAOTIEN ÉVANGÉLIQUE D'ÉCHANGES ET D'INFORMATION
Trimestriel *Avril-juin 2005* *28e année / 2* *Numéro 142*

CONTACT
Khouam Samphanh

Magazine franco-laotien
Commission paritaire N° 60729
ISSN 0223-7415

Prix du numéro : 6 €
Abonnement annuel : **20 €** – Etudiants : **12 €**
Abonnement de soutien dès **30 €**

➔ *Le prix de l'abonnement a diminué, mais nous ne pourrons désormais plus envoyer le journal qu'aux abonnés qui régleront leur abonnement, sauf circonstances exceptionnelles.*

Administration et impression

Service Missionnaire Evangélique
25, rue Pélisson
69100 VILLEURBANNE (France)

Directeur de la publication

Vanh Kheuanesombath

Equipe rédactionnelle

Vanh Kheuanesombath, Silvain Dupertuis,
Hermann Christen, Elie Sypraseuth, Ly Chia,
Kevaly Esperandieu, Pafon Sely, David Ratanat

CCP (postal account)

CAMAF-CONTACT
N° 7 710 75 F - Paris

ABONNEMENTS

FRANCE

A régler par chèque bancaire ou postal, par virement postal, ou par mandat-carte de versement à un CCP, à l'ordre de :

CAMAF-CONTACT
N° 7 710 75 F - Paris

SUISSE

Vous pouvez régler votre abonnement :
— soit sur le CCP du Service Missionnaire Evangélique à Bellevue (Genève), N° 12-1401-1 - Genève, en précisant bien sur le talon : «abonnement à Contact» (30.- FS)
— soit par virement postal sur notre compte CAMAF-CONTACT en France IBAN : FR 47 30041 00001 0771075F020

AUTRES PAYS

EUROPE

Effectuez votre versement comme pour la France, à l'ordre de CAMAF-CONTACT, par chèque ou de préférence par virement postal ou bancaire directement sur notre CCP (voir identifiant international ci-dessus). Pour les chèques en monnaie étrangère, ajouter l'équivalent de 3.50 € pour les taxes bancaires.

U.S.A. and CANADA

You can send checks and money orders to the order of CAMAF-CONTACT, but direct bank transfer at the bank counter or through internet, using the IBAN (international banking identification code), is preferable, as taxes on cheks are quite expensive (at least 10 US$). Minimum suscription : 30 US$ / 40 Can$ / 45 Aus$. Higher suscriptions are welcome, as this price does not cover all the costs.

NOS ADRESSES (rédaction – correspondants)

FRANCE ..... +33

Lyon

Vanh KHEUANESOMBATH
25, rue Pélisson
69100 VILLEURBANNE
✆ 04.78.84.20.26
sme.lyon@wanadoo.fr

Hermann CHRISTEN
11, Rue de Francfort
69140 RILLIEUX-la-Pape
✆ 04.78.97.07.28
hchristen@wanadoo.fr

Région Avignon-Arles- Nîmes

Richard LY (LY Chia)
18, av. de la Coupo Santo
30650 ROCHEFORT-du-GARD
✆ 04.90.31.79.11
chialy@aol.com

Daniel AUREILLE
6, Avenue des Grenadiers
30132 CAISSARGUES
✆ 04.66.29.88.25

Bounmy SELY
20 Rue Aniibal Ceccano
84000 AVIGNON
✆ 04.90.88.42.69
bounmy@free.fr

Bourges-Orléans

Elie SYPRASEUTH
7, rue de Sinay
18230 St-DOULCHARD
✆ 02.48.24.57.40

Région parisienne

Peunh SAYASANE
8, rue Auguste Renoir
93600 AULNAY-SOUS-BOIS
✆ 01.48.66.83.69

YANG Chû
4, Rue Petits Pas
91350 GRIGNY
✆ 08.71.09.40.30
chuyang@free.fr

Pafon SELY
74, Avenue Léo Lagrange
93190 LIVRY-GARGAN
✆ 01.43.51.18.94 + fax
pafon@free.fr

Khévang SELY
74, Avenue Léo Lagrange
93190 LIVRY-GARGAN
✆ 01.43.51.18.94 + fax
kay.sely@wanadoo.fr

USA – CANADA ..... +1

Boriboune SITHIDETH
20 Twenty Second Street
Etobicoke, ONT M8V 3M1
Canada

Rev. Boon VONGSURITH
Crievewood Baptist Church
480 Hogan Rd
Nashville, TN 37220, USA
✆ dom. (615) 832–5968
boon_v@hotmail.com

Miké Phrasavath
13021 McNally Rd.
La Mirada, CA 90638, USA
✆ (562) 902-0306
Fax (562) 907-9123
Mike_Phrasavath@usw.salvationarmy.org

M. Barnabas Tong Chitchalerntham
11301 Preswick Blvd
Eden Prairie, MN 55344, USA
✆ (952) 941–6225
chitchalerntham@msn.com

AUSTRALIE ..... +61

M. Tack SIRIVONG
3, Somers Street
Bonnyrigg, NSW 2177

M. Somchanh BOUALIWATH
32 Davina Cres
Cecil Hills, NSW 2171
✆ (02) 9822 1115

SUISSE ..... +41

Silvain DUPERTUIS
Rte de l'Etraz 20
Esp'asse bureau A302
1260 Nyon
✆ /fax +41–(0)22.361.66.90
✆ privé 022-774.20.67
silvain-dupertuis@bluewin.ch

Armand HEINIGER
10, chemin de la Gravière
1291 COMMUGNY
✆ 022-776.58.76 + fax
armand-heiniger@infomaniak.ch

Service Missionnaire Évangélique
Z.I. En Glapin 8, CH–1162 St-Prex
✆ 021-823.23-23
téléfax 021-806.51.30
aesr.sme@bluewin.ch

Page des jeunes

David et Rémy RATANAT
5, Place Lenôtre
69140 RILLIEUX-La-PAPE
✆ 04.78.88.26.08
drfox1@caramail.com
ittlefrak77@hotmail.com

Mme Kévaly ESPÉRANDIEU
31 av Jean Moulin
FR-84510 Caumont sur Durance
✆ 04.90.87.03.06
kevaly-esperandieu@worldonline.fr

ສາຣະບານ sommaire

- ❒ *ບກ ຖແລງ* *Editorial* Le mur détruit 4
- ❒ *ທຳເທສນາຢູ່ຈ້າຍພູເຂົາ (ຕໍ່)* *Le sermon sur la montagne*
  ຄວາມສັມພັນຂອງຄຣິສຕຽນກັບກັບພຣະບິດາ
  Notre relation avec Dieu 6
- ❒ ສັງຄົມເປັນຂ່າວ Le coin des nouvelles 11
- ❒ ການຟື້ນຟູສຳລັບຄອບຄົວ Camp-familles août 2005 14

PAGE DES JEUNES

- ❒ Nouvelles des groupes de jeunes 15
- ❒ ກະວີບັນເທີງ [Poème lao] 23
- ❒ ພາສາ - ວັທນະທັມ [Coutumes et culture] 24
- ❒ ຮ່ອງຮອຍຂອງບັນພະບູຣຸດລາວ — ກົດໝາຍອັນເກົ່າແກ່ຂອງເມືອງວຽງຈັນ
  Laos – Sur les traces de nos ancêtres
  Le code de Vientiane 25
- ❒ Légende laotienne : le Mékong et de la Mènam
  ເຣື່ອງ ແມ່ນ້ຳຂອງ ແລະແມ່ນ້ຳເຈົ້າພະຍາ 28
- ❒ *ຄວາມຮູ້ຮອບຕົວ* ໄຟສັນຍານການສັນຈອນ
  Curiosité Les feux tricolores 30
- ❒ *ສັມພັນຄຣິສຕະຈັກ* ກ້າວສູ່ການກຸ້ມຕົນເອງ
  Union des Eglises laotiennes : vers l'autonomie 32
- ❒ ການອອກທ່ຽວຂອງຄຣິສຕະຈັກ ອິວມ່ຽນ
  Sortie d'Eglise ຈ Aurel 34
- ❒ ປະກາດ (ທົ່ວໄປ — ຄອບຄົວ) Annonces – Carnet de famille . 35

Couverture:
Sortie des jeunes à Auxerre
(Photo David Kheuanesombath)

Ci-dessous
:week-end jeunesse
à Auxerre (voir p. 17)

ກຳແພງເຈື່ອນ

Le mur détruit

ວັນ ເຂື່ອນສົມບັດ Vanh Kheuanesombath

ເນື່ອງໃນງານຊາປະນະກິຈສົບຂອງສັນໂຕປະປາ ຄັ້ງວັນທີ 8/4/05 ທີ່ຜ່ານມານີ້, ບໍ່ພຽງແຕ່ຜູ້ສັດທາໃນຄຣິສຕະສາສນາເປັນລ້ານໆຄົນເທົ່ານັ້ນທີ່ໄດ້ບຸບຼງດັກນເຂົ້າມາຍັງກຸງໂຣມ ເພື່ອອຳລາຄາຣະວະຜູ້ມີພຣະຄຸນເປັນຄັ້ງສຸດທ້າຍ ແຕ່ຍັງມີຜູ້ຕາງໜ້າຂອງສາສນາຕ່າງໆທີ່ໄດ້ມີໜ້າໃນພິທີມະໂຫລານດັ່ງກ່າວນີ້ເພື່ອສະແດງຄວາມເສົ້າສລົດໃຈນຳຜູ້ທີ່ຈາກໄປນັ້ນອີກດ້ວຍ. ນອກຈາກພວກສັດທາ ແລະ ຜູ້ຕາງໜ້າເຫລົ່ານີ້ແລ້ວ, ຍັງມີຜູ້ນຳປະເທດຕ່າງໆຂອງຫລາຍໆຣະບອບການປົກຄອງບໍ່ຕ່ຳກວ່າສອງຮ້ອຍທ່ານທີ່ໄດ້ໃຫ້ກຽດເຂົ້າຮ່ວມໃນພິທີຊາປະນະກິດສົບຄັ້ງປວັດສາດ. ອາດເປັນຄັ້ງແຣກຂອງປວັດສາດທີ່ບໍ່ເຫັນມີການຈຳແນກສາສນາ ຄວາມເຊື່ອຖື, ຣະບອບການປົກຄອງ, ມິດກັບສັດຕຣູ ແຕ່ລະຄົນທີ່ເຂົ້າຮ່ວມ ຕ່າງກໍມີເປົ້າໝາຍຢ່າງດຽວກັນຄື ສະແດງຄວາມຮູ້ບຸນຄຸນຕໍ່ພຣະສັນໂຕປະປາ ຜູ້ຊຶ່ງຄາວເມື່ອຍັງມີຊີວິດຢູ່ນັ້ນ, ເປັນຜູ້ສແວງຫາທຸກວິທີທາງເພື່ອໃຫ້ເກີດມີຄວາມສເມີພາບແລະສັນຕິສຸກໃນທຸກທີ່ທຸກບ່ອນ; ທ່ານເປັນຜູ້ນຶ່ງທີ່ໄດ້ຕ້ານທານສິດທິຂອງຄົນຍາກຈົນອະນາຖາ ແລະເປັນຫ່ວງນຳໂຊກຊາຕາຂອງພວກທີ່ສັງຄົມລັງກຽດ; ທ່ານເຄີຍໄດ້ເທສນາສັ່ງສອນໃຫ້ມະນຸດເກີດມີຄວາມຮັກແລະຄວາມສາມັກຄີຊຶ່ງກັນແລະກັນໂດຍບໍ່ຕ້ອງເອົາປຽບເອົາລັດ.

ເມື່ອເຫັນພາບພິດແຫ່ງຄວາມເປັນເອກກະສັນກັນໃນພິທີດັ່ງກ່າວນີ້ໂດຍບໍ່ຈຳແນກເຊື້ອຊາດເຜົ່າພັນ, ສາສນາຄວາມເຊື່ອຖື ແລະລັດທິການປົກຄອງ ທຳໃຫ້ຂ້າພະເຈົ້າໃຝ່ຝັນຫາສັງຄົມມະນຸດບ່ອນທີ່ສິ່ງເຫລົ່ານີ້ຈະເກີດຂຶ້ນມາເປັນຈິງໄດ້. ບາງທີ, ຜູ້ອ່ານເອງກໍໃຝ່ຝັນເຊ່ນດຽວກັນກັບຂ້າພະເຈົ້າເພາະບ່ອນໃດທີ່ກຸ່ມສາສນາບໍ່ລັງກຽດຊັງກັນແຕ່ປະຕິບັດຄວາມເຊື່ອຂອງຕົນໄດ້ຢ່າງມີເສຣີ, ບ່ອນໃດທີ່ພັກການເມືອງຕ່າງໆສາມາດນັ່ງເຈຣະຈາກັນໄດ້ອ້ອມໂຕະໜ່ວຍດຽວເພື່ອຊອກຫາ

Lors des funérailles du pape Jean-Paul II, le 8 avril dernier, ce ne sont pas seulement des millions de fidèles du monde entier qui ont attendu des heures en file indienne pour pouvoir saluer le pape défunt et lui dire un dernier adieu, mais on a remarqué également la présence de divers représentants des autres religions. Plus de 250 chefs d'Etat représentant de nombreux pays ont aussi assisté à cette cérémonie grandiose et historique. C'était peut-être une première dans l'histoire que tant de monde se retrouvait sans distinction de religion ou de couleur politique, sans distinction entre amis et ennemis. Tous ceux qui étaient présents avaient un but commun : témoigner leur respect et leur reconnaissance envers le pape Jean-Paul II qui, de son vivant, a cherché par tous les moyens à promouvoir la paix dans le monde, a pris la défense du droit des pauvres et s'est intéressé aux exclus de la société. Dans ses nombreuses homélies, il appelait aux hommes et aux femmes à s'aimer et à se montrer solidaires sans tenir compte des conditions sociales et ethniques.

Cette image d'unité parfaite, sans distinction de race, de religion, de régime politique, qui ressortait de cette cérémonie, a suscité en moi le rêve de vivre dans une telle société. Peut-être avez-vous aussi ce rêve de vivre dans un endroit où il n'y aurait plus de haine contre telle ou telle croyance, chacun serait véritablement libre de professer la croyance de son choix. Nous aspirons tous à vivre dans un pays où tous les partis politiques peuvent s'asseoir autour de la table pour dialoguer et pour trouver ensemble une solution aux conflits et à leurs différences. Il serait tellement agréable de vivre dans un endroit où les pauvres ne seraient plus exploités par les riches et par ceux qui détiennent le pouvoir, mais où ils pourraient au contraire travailler librement pour subvenir à leurs propres besoins.

Pourquoi alors les chefs d'Etat, qu'ils dirigent des pays en bons termes ou en conflit les uns avec les autres, attendent une telle occasion pour échanger quelques mots et se serrer la main, quand on n'en reste pas à se jeter un coup d'oeil furtif et à se saluer d'une manière très superficielle et hypocrite? Pourquoi ces «grands» ne cherchent-ils pas à dialoguer les uns avec les autres et à se réconcilier pour permettre à la population dont ils ont la charge à jouir du bien-être et

ທາງອອກຈາກບັນຫາຄວາມຂັດແຍ່ງ, ບ່ອນໃດທີ່ຄົນທຸກຍາກ ຂາດເຂີນຫາມີວິທີທາງຫຳມາຫາກິນໂດຍບໍ່ຖືກຂູດເນື້ອເຖືອ ໜັງ, ສັງຄົມບ່ອນນັ້ນຄົງເປັນບ່ອນທີ່ໜ້າຢາກຢູ່ອາສັຍທີ່ສຸດ ເລີຍ!

ເປັນຫຍັງນໍ, ຜູ້ນຳປະເທດທັ້ງຫລາຍທີ່ເປັນມິດ ຫລືປໍຣະ ປັກຕໍ່ກັນຈຶ່ງລໍຖ້າໃຫ້ມີພິທີອັນໃຫຍ່ໂຕມະໂຫລານຢ່າງນີ້ຈຶ່ງ ສາມາດຍ່າງສວນທາງກັນ, ຖົ້ມສາຍຕາໃສ່ກັນ, ຈັບມືກັນ ແລະທັກທາຍກັນແບບໜ້າໄວ້ຫລັງຫລອກ? ເປັນຫຍັງພວກ ເພິ່ນຈຶ່ງບໍ່ຊອກຫາຊ່ອງທາງເຈຣະຈາ ແລະປະນີປະນອມກັນ ກ່ອນເພື່ອໃຫ້ເກີດມີຄວາມຢູ່ເຢັນເປັນສຸກແກ່ໄພ່ຟ້າ ປະຊາກອນຂອງໂລກ? ຖ້າແມ່ນທຳໄດ້ຢ່າງນີ້, ຂ້າພະເຈົ້າ ເຊື່ອແນ່ວ່າ ສັນໂຕປະປາ ຄົງຈະໄດ້ຈາກພວກເຮົາໄປຢ່າງມີ ສັນຕິສຸກໂດຍສິ້ນຄວາມເປັນຫ່ວງເປັນໃຍນຳຊີວິດການເປັນຢູ່ ແລະຄວາມປອດພັຍຂອງມະນຸດທັ້ງຫລາຍໃນໂລກນີ້.

ເປັນທີ່ຄັດຄ້ານບໍ່ໄດ້ເລີຍວ່າແມ່ນຄວາມມໍຣະນະພາບ ຂອງ ສັນໂຕປະປາ, ຄົນຂອງພຣະເຈົ້າທີ່ສາມາດເຕົ້າໂຮມທຸກ ສາສນາ, ໂຮມນັກການເມືອງທຸກພັກທຸກຝ່າຍໃຫ້ຫັນໜ້າມາ ຫາກັນ, ໂຮມ ຄຣິສຕະສາສນິກະຊົນຂອງຫລາຍໆປະເທດໃຫ້ ເປັນຈິດນຶ່ງໃຈດຽວກັນແລະໄຫວ້ວອນອະທິຖານຮ່ວມກັນໄດ້ ແຕ່ຄວາມມໍຣະພາບຂອງພຣະຄຣິດຍິ່ງມີອິດທິພົນໃຫຍ່ໄປ ກວ່ານີ້ອີກເພາະດ້ວຍທາງຄວາມຕາຍ, ພຣະຄຣິດໄດ້ຊົງ ທຳລາຍກຳແພງທີ່ຂັ້ນລະຫວ່າງການເປັນສັດຕຣູຂອງມະນຸດ ກັບພຣະເຈົ້ານັ້ນຖົ້ມເສັຍ ເພື່ອອະນຸຍາດໃຫ້ມະນຸດມີທາງປະ ນີປະນອມກັບພຣະອົງໄດ້. ນອກຈາກນັ້ນແລ້ວ, ຄວາມຕາຍ ຂອງພຣະຄຣິດຍັງໄດ້ທຳລາຍກຳແພງແຫ່ງການເປັນສັດຕຣູ ກັນລະຫວ່າງມະນຸດກັບມະນຸດໂດຍການຈຳແນກເຊື້ອຊາດ ແລະເຜົ່າພັນກັນອີກດ້ວຍ. ສະນັ້ນ, ຄວາມສັດທາໃນພຣະອົງ ຈຶ່ງທຳໃຫ້ຄົນທັ້ງຫລາຍປະຕິເສດຕໍ່ຄວາມລັງກຽດຜິວ ຫລືເອົາ ປຽບເອົາລັດກັນນັ້ນໄດ້ເພາະວ່າມີຫົນທາງທີ່ຈະກາຍມາເປັນ ມິດກັນແລະກັນໄດ້. ສຳຄັນຍິ່ງໄປກວ່ານັ້ນອີກຄືຄວາມສັດທາ ນີ້ໄດ້ທຳໃຫ້ເຮົາເປັນອ້າຍເປັນນ້ອງກັນ; ເພາະເວລາໃດທີ່ເຮົາ ມີຄວາມສັດທາໃນພຣະຄຣິດ, ພວກເຮົາໄດ້ຮັບອະພິສິດໃຫ້ ກາຍມາເປັນບຸດຊາຍ ບຸດຍິງ ຂອງພຣະເຈົ້າອົງສູງສຸດ ແລະອົງ ຊົງຊີວິດຢູ່.

de vivre dans la paix? S'il en était ainsi, peut-être le Pape Jean-Paul II serait-il parti en paix, sans s'inquiéter pour la paix et pour la société des citoyens de ce monde qu'il aimait tant.

Il est donc indéniable que la mort de Jean-Paul II, homme d'Eglise et homme de Dieu, a permis à toutes les religions de s'unir, à tous les partis politiques à se parler, à tous les croyants du monde entier de se montrer solidaires et de prier ensemble... Cependant, la mort de Jésus-Christ a une bien plus grande portée. La Bible nous dit que par sa mort, Christ a détruit le mur qui se dresse en ennemi entre Dieu et les hommes pour permettre à ces derniers de se réconcilier avec leur créateur. De plus, cette mort de Jésus, il y a 2000 ans, a également détruit le mur de séparation entre races, cultures et croyances qui divisent les hommes pour leur permettre de vivre en paix les uns à côté les autres. C'est pourquoi, la vraie foi en Lui permet à de nombreux croyants de renoncer au racisme et à la xénophobie – qui sont une véritable plaie dans notre société moderne. Et cela va plus loin encore : une foi authentique en Christ nous permet de nous reconnaître frères et soeurs, car nous sommes devenus enfants du même Père.

ທຳເທສນາຢູ່ຈ້າຍພູເຂົາ (ຕໍ່) Le sermon sur la montagne

ຄວາມສັມພັນຂອງຄຣິສຕຽນກັບກັບພຣະບິດາ Notre relation avec Dieu

ສອງຄັ້ງຜ່ານມາແລ້ວ, ພວກເຮົາໄດ້ຮຽນຮູ້ນຳກັນເຖິງຄຳສັ່ງສອນຂອງພຣະເຢຊູໃນພຣະທັມ ມັດທາຍ ບົດ 7 ກ່ຽວກັບເຣື້ອງຄວາມສັມພັນອັນຖືກຕ້ອງທີ່ຄຣິສຕຽນຄວນຈະມີຕໍ່ກັນແລະກັນຄື :

- ບໍ່ຕ້ອງຕັ້ງຕົວຂຶ້ນແລະປະກາດຕົນເອງເປັນຜູ້ພິພາກສາຄົນອື່ນ,
- ບໍ່ຕ້ອງເປັນຄົນໜ້າຊື່ໃຈຄົດ,
- ຕ້ອງປະຕິບັດຕໍ່ກັນແລະກັນໃນຖານະອ້າຍນ້ອງຮ່ວມໃນຄອບຄົວດຽວກັນ,

ແລະໃນ ຄວາມສັມພັນ ສະບັບກ່ອນ, ພວກເຮົາໄດ້ກ່າວເຖິງຄຳປຽບທຽບຄົນບາງຈຳພວກໃສ່ກັບໝາ ແລະໝູ.

ໃນອັກຕໍ່ໄປນີ້, ພຣະເຢຊູຊົງແນະນຳວ່າພວກຄຣິສຕຽນຄວນຈະມີທ່າທີຢ່າງໃດຕໍ່ພຣະບິດາຜູ້ຊົງສະຖິດຢູ່ໃນສວັນ.

> ຈົ່ງໝັ່ນຂໍ ແລ້ວຈະຊົງປະທານໃຫ້ ; ຈົ່ງໝັ່ນຊອກແລ້ວຈະພົບ ; ຈົ່ງໝັ່ນເຄາະ ແລ້ວຈະຊົງໄຂໃຫ້. ເພາະວ່າທຸກຄົນທີ່ໝັ່ນຂໍກໍໄດ້ຮັບ ; ທຸກຄົນທີ່ໝັ່ນຊອກກໍພົບ ; ທຸກຄົນທີ່ໝັ່ນເຄາະກໍຊົງໄຂໃຫ້. ໃນພວກທ່ານມີຜູ້ໃດແດ່ ຖ້າລູກຂໍເຂົ້າປັ້ນນຶ່ງ ຈະບໍ່ເອົາກ້ອນຫີນໃຫ້ຕື ! ຫລືຖ້າລູກຂໍປາຈະບໍ່ເອົາງູໃຫ້ຕື ! ເຫດສັນນັ້ນ, ຖ້າພວກທ່ານຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ລູກຂອງຕົນ ; ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນ ຈະຊົງປະທານຂອງດີໃຫ້ແກ່ຜູ້ທີ່ຂໍນຳພຣະອົງ (ມັດທາຍ 7 : 7- 11).

ຢູ່ໃນຄຳສັ່ງສອນຂອງວັກນີ້, ພວກເຮົາຈະໄດ້ພົບພຣະສັນຍາອັນບໍ່ປ່ຽນແປງຂອງພຣະເຢຊູ, ຈະພິຈາຣະນາຄຳໂຕ້ແຍ້ງຂອງຄົນໃນສມັຍນີ້ ແລະບົດຮຽນອັນລ້ຳຄ່າທີ່ພວກເຮົາແຕ່ລະຄົນສົມຄວນທີ່ຈະຖອດຖອນແລະນຳມາໝູນໃຊ້ໃນຊີວິດປະຈຳວັນຂອງຕົນ.

ກ - ພຣະສັນຍາ

ບໍ່ແມ່ນເປັນເທື່ອທຳອິດທີ່ພຣະເຢຊູໄດ້ສັ່ງສອນເຖິງເຣື້ອງການໄຫວ້ວອນອະທິຖານຢູ່ໃນຄຳເທສນາທີ່ຈ້າຍພູເຂົາ. ເມື່ອເລີ້ມຕົ້ນ, ພຣະເຢຊູໄດ້ຊົງສັ່ງສອນບໍ່ໃຫ້ຄຣິສຕຽນອະທິຖານແບບຄົນໜ້າຊື່ໃຈຄົດດັ່ງດຽວກັບພວກ ຟາຣີຊາຍ, ບໍ່ໃຫ້ອະທິຖານແບບຫລຳຄວາມເກົ່າດັ່ງຄົນຕ່າງຊາດເຄີຍປະຕິບັດ ແລະນອກນັ້ນ, ພຣະອົງກໍໄດ້ວາງແບບຢ່າງຂອງການອະທິຖານອັນຖືກຕ້ອງຊຶ່ງພວກຄຣິສຕຽນສົມຄວນຈະທ່ອງຈຳໄດ້ກັບປາກອີກດ້ວຍ. ໃນທີ່ນີ້, ພຣະເຢຊູບໍ່ພຽງແຕ່ໝູນໃຈເຮົາໃຫ້ອະທິຖານເທົ່ານັ້ນ ແຕ່ຍັງໄດ້ສັນຍາວ່າຈະຕອບຕໍ່ຄຳອະທິຖານຕ່າງໆ

Dans les deux derniers numéros de «Contact», nous avons commencé à étudier le chapitre 7 de l'évangile de Matthieu, qui parle de la relation entre chrétiens. Nous avons traité les sujets suivants:

1. Ne pas nous établir comme juge de nos frères.
2. Ne pas être hypocrites dans notre pratique religieuse.
3. Se considérer les uns les autres comme des frères et soeurs appartenant à une même famille.
4. Et enfin, dans le dernier numéro, nous avons parlé de ces gens que le Seigneur désigne du terme de «chiens» et de «pourceaux».

Dans la suite de ce chapitre 7, Jésus parle de l'attitude à avoir envers notre Père qui est au cieux :

> Demandez et l'on vous donnera, cherchez et vous trouverez, frappez et l'on vous ouvrira. Car quiconque demande reçoit, celui qui cherche trouve, et l'on ouvrira à celui qui frappe. Quel homme parmi vous donnera une pierre à son fils, s'il lui demande de pain? Ou s'il demande un poisson, lui donnera-t-il un serpent? Si donc, vous qui êtes mauvais, vous savez donner de bonnes choses à vos enfants, à combien plus forte raison votre Père qui est dans les cieux en donnera-t-il de bonnes à ceux qui lui demandent.

Nous allons voir dans ce passage la promesse immuable que Jésus nous fait, réfléchir sur les diverses interprétations qu'en font nos contemporains, et en tirer des leçons pratiques pour notre vie quotidienne.

Les promesses

Ce n'est pas la première fois que Jésus aborde le thème de la prière dans ce Sermon sur la montagne. Au début déjà, Jésus recommande à ses disciples de ne pas prier comme les hypocrites, comme les Pharisiens, qui répètent sans cesse les mêmes paroles comme le font les païens. Pour nous donner un exemple pratique, le Seigneur nous donne ici un modèle de prière, une prière que tous les chrétiens devraient apprendre par coeur. Ici, Jésus ne nous encourage pas seulement à prier, mais il promet de répondre vraiment à notre prière. C'est cette assurance même de la promesse que

ຂອງພວກເຮົາຢ່າງແນ່ນອນອີກດ້ວຍ. ທີ່ຈິງແລ້ວ, ແມ່ນຄວາມໝັ້ນໃຈວ່າພຣະເຈົ້າຊົງສັນຍາວ່າຈະຕອບຕໍ່ຄຳອະທິຖານຂອງພວກເຮົານີ້ເອງທີ່ເປັນແຮງຈູງໃຈໃຫ້ຄຣິສຕຽນເຮົາຕ້ອງອະທິຖານ. ພຣະເຈົ້າຊົງຊາບວ່າພວກເຮົາເປັນຄົນທີ່ມີຄວາມຢ້ານກົວ ແລະຫລາຍຄັ້ງຫລາຍຄາວ, ພວກເຮົາຍັງບໍ່ມີຄວາມແນ່ນອນໃຈໃນຄຳຕອບຕໍ່ຄຳທູນຂໍຂອງພວກເຮົາອີກດ້ວຍ. ສະນັ້ນ, ພຣະອົງຜູ້ຊົງຊາບສິ່ງເຫລົ່ານີ້ຈຶ່ງຊົງປະທານພຣະສັນຍາກ່ຽວກັບຄຳຕອບນີ້ໃຫ້ແກ່ພວກເຮົາ. ໃນຖານະທີ່ພວກເຮົາເປັນຄຣິສຕຽນ, ພຣະຄຳພີປຽບພວກເຮົາໃສ່ກັບທາຣົກຂອງພຣະເຈົ້າ ; ແລະທາຣົກທຸກໆຄົນກໍຕ້ອງການຢູ່ໃກ້ຊິດກັບຜູ້ເປັນແມ່ສເມີ. ເມື່ອມີແມ່ຢູ່ໃກ້, ທາຣົກກໍຈະຂໍ, ເມື່ອບໍ່ເຫັນແມ່, ທາຣົກກໍຈະຊອກ ແລະເມື່ອເຂົ້າໄປຫາແມ່ໃນຫ້ອງບໍ່ໄດ້ ທາຣົກກໍຈະເຄາະ. ເພາະສະນັ້ນ, ພຣະເຢຊູຈຶ່ງໄດ້ຍົກເອົາຄຳປຽບທຽບທີ່ຄຸ້ນເຄີຍດີ (ເຂົ້າຈີ່, ປາ) ຄືເຄື່ອງບໍຣິໂພກປະຈຳວັນມາເປັນຂໍ້ອ້າງອີງ ແລະສັ່ງສອນເພື່ອຊ່ວຍໃຫ້ພວກສາວົກເຂົ້າໃຈພຣະສັນຍານີ້ໄດ້ດີຍິ່ງຂຶ້ນ. ຖ້າຫາກວ່າລູກຫົວ ແລະຂໍເຂົ້າຈີ່ ແນ່ນອນວ່າຜູ້ເປັນພໍ່ຈະບໍ່ເອົາກ້ອນຫີນໃຫ້ລູກນັ້ນ ! ພໍ່ຜູ້ເປັນຄົນບາບແລະເປັນຄົນເຫັນແກ່ຕົວຍັງຮູ້ຈັກຮັກລູກ ແລະຮູ້ຈັກໃຫ້ແຕ່ສິ່ງທີ່ດີໆແກ່ລູກຂອງຕົນ ສັນໃດ ພຣະບິດາຜູ້ຊົງພຽບພ້ອມດ້ວຍຄວາມດີງາມທຸກປະການ ກໍຍິ່ງຈະປະທານຂອງດີໆໃຫ້ແກ່ຜູ້ທີ່ຂໍນຳພຣະອົງສັນນັ້ນ (ຂໍ້ 11). ຖ້າພຣະເຈົ້າຊົງພໍພຣະທັຍທີ່ຈະຮັບເຮົາເປັນບຸດ ກໍຍ່ອມຊົງພໍພຣະທັຍປະທານສິ່ງທີ່ດີໃຫ້ແກ່ເຮົາໃນເມື່ອເຮົາທາກທູນຂໍນຳພຣະອົງດ້ວຍຄວາມໝັ້ນໃຈ.

ຊາວຄຣິສຕຽນທຸກຍຸກທຸກສມັຍໄດ້ມອບຄວາມເຊື່ອໝັ້ນແລະຄວາມໄວ້ວາງໃຈຂອງເຂົາໃນພຣະສັນຍາເຫລົ່ານີ້ຂອງພຣະຄຣິດ ແລະພວກເຂົາກໍບໍ່ເຄີຍເກີດຄວາມຜິດຫວັງໃນຊີວິດ ເພາະພຣະສັນຍາເຫລົ່ານີ້ເກີດເປັນຈິງໄດ້ກັບຄົນທຸກສມັຍທີ່ໄວ້ວາງໃຈໃນພຣະສັນຍາຂອງພຣະອົງ.

ຂ - ຄວາມເຫັນຕ່າງໆຂອງມະນຸດໃນສມັຍນີ້ກ່ຽວກັບການອະທິຖານ

ພຣະສັນຍາອັນໂຈ່ງແຈ້ງກ່ຽວກັບການອະທິຖານທີ່ວ່າ : ຈົ່ງໝັ່ນຂໍ ແລ້ວຈະຊົງປະທານໃຫ້ ; ຈົ່ງໝັ່ນຊອກແລ້ວຈະພົບ ; ຈົ່ງໝັ່ນເຄາະແລ້ວຈະຊົງໄຂໃຫ້ ມັກຈະນຳໃຫ້ລາງຄົນເກີດມີຄວາມຄິດຄວາມເຫັນຕ່າງໆກ່ຽວກັບເຣື້ອງນີ້ :

1 - ຖ້າພຣະເຈົ້າຊົງຊາບເຖິງຄວາມຕ້ອງການຂອງເຮົາແລ້ວ, ເປັນຫຍັງຈຶ່ງຕ້ອງອະທິຖານ ?

ບາງຄົນເຂົ້າໃຈວ່າການອະທິຖານທູນຂໍເປັນການດູໝິ່ນພຣະເຈົ້າເພາະເຖິງຢ່າງໃດພຣະເຈົ້າກໍຊົງຊາບເຖິງຄວາມຈຳເປັນຂອງພວກເຮົາໝົດແລ້ວ. ພວກເຫລົ່ານີ້ໄດ້ນຳເອົາຄຳສອນຂອງພຣະເຢຊູເອງມາເປັນຂໍ້ອ້າງອີງເພາະພຣະອົງຊົງສອນໄວ້ໃນບົດກ່ອນໆນີ້ວ່າ : ພຣະບິດາຂອງພວກທ່ານຜູ້ສະຖິດຢູ່ໃນສວັນຊົງຊາບແລ້ວວ່າພວກທ່ານຕ້ອງການສິ່ງເຫລົ່ານີ້ (ມັດທາຍ 6 :32).

ຂໍ້ໂຕ້ແຍ້ງດັ່ງກ່າວນີ້ອາດຈະເກີດມາຈາກຄວາມເຂົ້າໃຈຜິດຫລາຍກວ່າເພາະຕາມຄວາມເປັນຈິງແລ້ວ, ສິ່ງທີ່ພຣະເຈົ້າມີພຣະປະສົງຢາກຈະປະທານໃຫ້ແກ່ພວກເຮົານັ້ນມັນບໍ່ໄດ້ຂຶ້ນຢູ່ກັບການທູນຂໍຂອງພວກເຮົາທຸກຄັ້ງ ; ແມ່ນຕັ້ງແຕ່ພໍ່Dieu répond à nos prières qui encourage les chrétiens à prier. C'est justement parce que Dieu connaît nos craintes et sait que nous ne sommes pas très sûrs d'obtenir une réponse à nos prières qu'il nous donne lui-même ces merveilleuses promesses. La Bible compare le chrétien à un nouveau-né de Dieu qui éprouve le besoin de la proximité maternelle. Quand un enfant se trouve tout près de sa maman, il ose demander; s'il ne la voit plus, il se met à la chercher, et s'il ne peut pas entrer dans la chambre où elle se trouve, il frappe alors à la porte de toutes ses forces. C'est ainsi que Jésus prend l'exemple des besoins les plus ordinaires de tout un chacun, en particulier des petits enfants : du pain et du poisson, les produits de consommation quotidienne de l'époque, pour nous faire comprendre la promesse de Dieu. Supposons que notre enfant a faim et qu'il demande du pain à son père, ce dernier ne lui donnera certainement pas des cailloux à la place! Les pères humains, qui sont pécheurs et mauvais, savent donner de bonnes choses à leurs enfants, combien à plus forte raison, Dieu le Père, qui est plein d'amour et de bienveillance, en donnera de meilleures encore à ceux qui les lui demandent (verset 11). Si Dieu prend plaisir à nous accepter comme ses enfants, il prend le même plaisir à nous accorder de bonnes choses lorsque nous les lui demandons avec foi et avec assurance.

Les chrétiens de toutes les époques ont mis leur confiance en ces promesses de Jésus, et ils ne seront jamais déçus, car Dieu répond toujours et ces promesses sont donc actuelles.

Les différentes interprétations

Certains avancent différents arguments pour mettre en doute la véracité de cette promesse de Dieu qui dit clairement: « Demandez et l'on vous donnera, cherchez et vous trouverez, frappez et l'on vous ouvrira. Car quiconque demande reçoit, celui qui cherche trouve, et l'on ouvrira à celui qui frappe ».

1 - Si Dieu connaît nos besoins, à quoi sert-il de prier ?

Certains pensent que la prière est une sorte de mépris contre Dieu, puisque de toute façon Dieu connaît nos besoins à l'avance. Ils s'appuient d'ailleurs sur une parole de Jésus lui-même, qui affirme dans le chapitre précédent (Matthieu 6.32) que « votre Père céleste sait que vous en avez besoin ».

Comment réfuter cette argumentation ? Cet argument reflète une compréhension erronée de la Parole de Dieu. En réalité, ce que Dieu désire nous donner ne correspond pas toujours avec nos demandes. D'ailleurs, les pères humains non plus n'attendent pas systématiquement que leurs enfants leur demandent quelque chose avant de leur donner

ແມ່ຝ່າຍມະນຸດຍັງບໍ່ໄດ້ລໍຖ້າໃຫ້ລູກມາຂໍນຳທຸກເທື່ອກ່ອນຈະເອົາສິ່ງທີ່ຈຳເປັນໃຫ້ແກ່ລູກໆ. ທີ່ຈິງແລ້ວ, ເຫດຜົນທີ່ວ່າເຮົາຕ້ອງທູນຂໍກ່ອນແລ້ວພຣະເຈົ້າຈະຊົງປະທານໃຫ້ນັ້ນ ບໍ່ແມ່ນເປັນເພາະພຣະເຈົ້າບໍ່ຊາບເຖິງຄວາມຈຳເປັນຂອງເຮົາ ຫລືເພາະພຣະອົງຊົງລັ່ງເລໃຈທີ່ຈະປະທານໃຫ້ ແຕ່ເຫດຜົນທີ່ແທ້ຈິງນັ້ນມັນກ່ຽວຂ້ອງກັບຕົວເຮົາເອງ. ບັນຫາບໍ່ໄດ້ຢູ່ບ່ອນວ່າພຣະເຈົ້າຈະຊົງປະທານໃຫ້ຫລືບໍ່ ແຕ່ຢູ່ບ່ອນທີ່ວ່າເຮົາເອງພ້ອມທີ່ຈະຮັບເອົາໄດ້ຫລືບໍ່ ? ມີຄວາມຈິງຂໍ້ນຶ່ງທີ່ພວກເຮົາມັກຫລົງລືມສເມີໃນເມື່ອເຮົາອະທິຖານທູນຂໍສິ່ງໃດສິ່ງນຶ່ງຈາກພຣະເຈົ້າຄືວ່າ ພຣະເຈົ້າໃນຖານະເປັນພຣະບິດາຈະບໍ່ທຳໃຫ້ບັນດາລູກໆຂອງພຣະອົງກາຍເປັນຄົນເສັຍນິດສັຍໄປໂດຍເອົາໃຈທຸກຢ່າງເຊ່ນ : ການປະທານສິ່ງທີ່ລູກບໍ່ຈຳເປັນຕ້ອງໃຊ້ ຫລືບໍ່ທັນພ້ອມທີ່ຈະຮັບ. ກ່ອນຈະຊົງປະທານສິ່ງທີ່ຈຳເປັນແນວໃດແນວນຶ່ງໃຫ້, ພຣະເຈົ້າຊົງລໍຖ້າໃຫ້ລູກຂອງພຣະອົງເປັນຄົນພຽບພ້ອມເສັຍກ່ອນ ເພື່ອວ່າສິ່ງທີ່ພຣະອົງຊົງປະທານໃຫ້ນັ້ນຈະບໍ່ເປັນພິດພັຍອັນຕະຣາຍໃດໆຕໍ່ຊີວິດຂອງພວກເຂົາ. ສະນັ້ນ, ການທູນຂໍສິ່ງຈຳເປັນຈາກພຣະເຈົ້າຈຶ່ງບໍ່ເປັນແນວຜິດ ແຕ່ເປັນສິ່ງທີ່ພຣະຄຳພີສນັບສນຸນໃຫ້ຄຣິສຕຽນປະຕິບັດ ເພາະຖ້າລະເລັຍແລ້ວ ຫລືເຂົ້າໃຈໃນແງ່ທີ່ກ່າວມານີ້ ຢ້ານວ່າຈະເປັນການຂັດກັບຄຳສັ່ງສອນຂອງພຣະເຢຊູ ແລະຂອງພວກອັຄທູດທີ່ໃຫ້ພວກເຮົາທູນຂໍນຳພຣະບິດາ. ອຈ ຢາໂກໂບ ໄດ້ເພີ້ມເຕີມຄຳສອນຂອງພຣະເຢຊູໃນຂໍ້ນີ້ໂດຍກ່າວວ່າ : ພວກທ່ານບໍ່ມີ ເພາະບໍ່ໄດ້ທູນຂໍ (ຢາໂກໂບ 4 :2). ການອະທິຖານທູນຂໍສິ່ງຈຳເປັນນຳພຣະເຈົ້າຍັງເປັນຂໍ້ພິສູດບົ່ງບອກເຖິງການເພິ່ງພາອາສັຍພຣະອົງດ້ວຍຄວາມຖ່ອມໃຈອີກດ້ວຍ.

2 - ການອະທິຖານເປັນສິ່ງຈຳເປັນຫລືບໍ່ ?

ພວກອື່ນຍັງເຂົ້າໃຈອີກວ່າການອະທິຖານທູນຂໍເປັນສິ່ງທີ່ບໍ່ຈຳເປັນເລີຍ. ພວກນີ້ອ້າງອີງໃສ່ຄົນທົ່ວໆໄປທີ່ສາມາດດຳເນີນຊີວິດຢູ່ໄດ້ໂດຍບໍ່ຕ້ອງອະທິຖານເລີຍ ແລະພວກເຂົາກໍຍັງໄດ້ຮັບສິ່ງຈຳເປັນແບບດຽວກັນກັບພວກຄຣິສຕຽນທີ່ອະທິຖານ ! ສິ່ງທີ່ເຂົາຕ້ອງການນັ້ນລ້ວນແລ້ວແຕ່ໄດ້ມາດ້ວຍການອອກແຮງງານ ບໍ່ແມ່ນດ້ວຍການອະທິຖານ. ຊາວໄຮ່ຊຸຊາວນາມີເຂົ້າກິນກໍຍ້ອນການອອກແຮງງານແບບເອົາຫລັງສູ້ຟ້າ ໜ້າສູ້ດິນບໍ່ແມ່ນດ້ວຍການອະທິຖານ. ຄອບຄົວມີເງິນໃຊ້ຈ່າຍກໍຍ້ອນການທຳງານອັນອຶດເມື່ອຍຂອງຄົນໃນຄອບຄົວ ບໍ່ແມ່ນດ້ວຍການອະທິຖານນີ່ສິ່ງທັງໝົດເຫລົ່ານີ້ບົ່ງບອກວ່າບໍ່ຈຳເປັນຕ້ອງອະທິຖານກໍໄດ້.

ເພື່ອຕອບໂຕ້ຕໍ່ຄວາມຄິດແບບນີ້, ເຮົາຕ້ອງຮູ້ຈັກໃຈແຍກລະຫວ່າງຂອງປະທານທີ່ພຣະເຈົ້າຊົງປະທານໃຫ້ໃນຖານະເປັນພຣະຜູ້ຊົງສ້າງ ແລະໃນຖານະທີ່ເປັນພຣະບິດາ. ໃນຖານະເປັນພຣະຜູ້ສ້າງ, ພະເຈົ້າຊົງມີພຣະຄຸນລວມ (ຊີວິດ, ລົມຫາຍໃຈ, ອາຫານ, ລູກ, ຄອບຄົວ) ສຳລັບມວນມະນຸດທັງປວງ ບໍ່ວ່າມະນຸດຈະອະທິຖານ ຫລືເຊື່ອໄວ້ວາງໃຈໃນພຣະອົງຫລືບໍ່ກໍຕາມ, ພຣະອົງຍັງຊົງປະທານສິ່ງດີໆເຫລົ່ານີ້ໃຫ້ພວກເຂົາສເມີມາ ; ພຣະອົງຊົງບັນດານໃຫ້ດວງຕາເວັນຂຶ້ນສ່ອງໃສ່ຄົນຊົ່ວແລະຄົນດີສເມີກັນ (ມັດທາຍ 5 :45). ແຕ່ໃນຖານະທີ່ເປັນພຣະບິດາ, ພຣະເຈົ້າຊົງປະທານຂອງພຣະຣາຊທານແຫ່ງຄວາມລອດພົ້ນໃຫ້ແກ່ຜູ້ທີ່ທູນຂໍນຳພຣະອົງເທົ່ານັ້ນ ເພາະວ່າຜູ້ທີ່ຮ້ອງອອກພຣະນາມຂອງພຣະ

ce dont ils ont besoin. En réalité, il y a une raison précise pour laquelle nous sommes appelés à demander quelque chose à Dieu avant de le recevoir. Non pas parce que Dieu ignorerait nos vrais besoins ou parce qu'il hésiterait à nous accorder ce dont nous avons besoin, mais parce que la réception de ce qu'il veut nous donner dépend entièrement de nous. Le problème n'est pas de savoir si Dieu est prêt à nous répondre ou non, mais de savoir dans quelle mesure nous sommes prêts à recevoir ce qu'il veut nous donner. Il y a une réalité que nous oublions souvent : en tant que Père, Dieu ne laisse jamais ses enfants faire leurs caprices en leur accordant tout ce dont ils ont envie sans discernement. Il ne va pas peut-être pas nous donner certaines choses dont nous avons envie mais qui ne sont en réalité pas nécessaires, et il ne va pas non plus nous donner ce que nous ne sommes pas encore prêts à recevoir. Car avant de donner quoi que ce soit à ses enfants, Dieu attend qu'ils soient responsables, et il ne nous accord pas ce qui constituerait pour nous un danger dont nous ne sommes peut-être conscients. Il est donc parfaitement légitime de demander à Dieu ce qui nous est nécessaire pour vivre, et la Bible nous encourage à présenter ces demandes à Dieu. Le fait que Dieu connaisse nos besoins à l'avance ne nous dispense pas de prier Dieu pour cela, comme nous y encouragent l'enseignement de Jésus lui-même et de ses apôtres qui tous, nous y encouragent. L'apôtre Jacques, par exemple, nous dit que « nous ne possédons pas parce que nous ne demandons pas » (4:2). De plus, demander quelque chose à Dieu montre aussi que nous sommes totalement dépendants de lui.

2 - Est-ce que la prière est nécessaire?

D'autres pensent qu'il n'est pas nécessaire ni même utile de prier. Ils s'appuient sur le fait que bien des hommes et des femmes vivent parfaitement bien sans prier comme le font les chrétiens. Selon eux, les biens que nous possédons sont le produit de notre labeur et non de nos prières. Si les paysans récoltent du riz au bout de l'année, c'est parce qu'ils ont travaillé dur pour cela, ce qui permet à une famille de vivre confortablement, c'est que chaque membre gagne suffisamment d'argent... Voilà, selon l'argumentation développée, une preuve suffisante pour démontrer l'inutilité de la prière.

Pour répondre à ce raisonnement, il faut discerner entre ce que Dieu nous donne en tant que créateur et en tant que Père. En tant que créateur, Dieu donne à toutes ses créatures les biens nécessaires qu'on appelle la «grâce commune» : la vie, le souffle, la nourriture, les enfants, la famille, etc., qu'elles le prient ou non. Comme le dit Jésus dans un passage précédent, « Dieu fait lever son soleil sur les méchants et sur les bons, et il fait

ອົງຈະໄດ້ລອດພົ້ນ (ໂຣມ 10 :12 13), ພຣະເຈົ້າພຣະບິດາຊົງປະທານພຣະ ພອນຝ່າຍວິນຍານ ຊຶ່ງພຣະເຢຊູຊົງຮຽກວ່າເປັນສິ່ງທີ່ດ ທີ່ພຣະບິດາຊົງປະທານ ໃຫ້ສະເພາະແຕ່ຜູ້ຂໍນຳພຣະອົງເທົ່ານັ້ນ (ມັດທາຍ 7 :11). ສິ່ງທີ່ດີເຫລົ່ານີ້ເປັນ ຜົນແຫ່ງພຣະຣາຊກິດຂອງພຣະວິນຍານບໍຣິສຸດທີ່ພຣະບິດາຊົງປະທານແກ່ຜູ້ທີ່ຂໍ ຕໍ່ພຣະອົງ (ລູກາ 11 :13) ຊຶ່ງໄດ້ແກ່ການອະໄພຍຄວາມຜິດບາບ, ຄວາມລອດ ພົ້ນຈາກອຳນາດອັນຊົ່ວຮ້າຍ, ສັນຕິສຸກ, ຄວາມເຊື່ອທີ່ທະວີຂຶ້ນ, ຄວາມຫວັງ ແລະຄວາມຮັກ ເພາະສະນັ້ນ, ພວກເຮົາຈຳເປັນຕ້ອງທູນຂໍສິ່ງເຫລົ່ານີ້.

ແມ່ນຕັ້ງແຕ່ຢູ່ໃນຄຳອະທິຖານຕາມແບບຂອງພຣະເຢຊູ ພຣະອົງໄດ້ຊົງສອນ ໃຫ້ເຮົາທູນຂໍທັງຂອງປະທານໃນການຊົງສ້າງ ແລະຂອງປະທານໃນການຊົງໄຖ່ ຄື ພຣະອົງສອນໃຫ້ເຮົາທູນຂໍອາຫານປະຈຳວັນ ແລະທູນຂໍການຍົກໂທດບາບ ແລະ ການລອດພົ້ນຈາກການທົດລອງອີກດ້ວຍ.

3 - ການອະທິຖານເປັນສິ່ງທີ່ໄຮ້ຜົນຫລືບໍ່ ?

ໄດ້ກວ່າສອງພັນປີມາແລ້ວທີ່ຄົນຄຣິສຕຽນພາກັນອະທິຖານ ແຕ່ປາກົດວ່າ ຄຳອະທິຖານຂອງເຂົາບໍ່ໄດ້ປ່ຽນໂສມໜ້າຂອງໂລກນີ້ແຕ່ຢ່າງໃດເລີຍ ! ຫລາຍໆ ຄົນກໍເຄີຍທູນຂໍບາງສິ່ງບາງແນວນຳພຣະເຈົ້າແຕ່ກໍບໍ່ໄດ້ຮັບຄຳຕອບສເມີໄປ. ນັກ ສຶກສາອະທິຖານພຣະເຈົ້າໃຫ້ຊ່ວຍໃນການສອບເສັງ ແຕ່ແລ້ວກໍຍັງເສັງຕົກ ! ຫລາຍຄົນອະທິຖານຂໍໃຫ້ຫາຍປ່ວຍ ແຕ່ອາການກໍເລວຊາມຂຶ້ນທຸກມື້ ! ຄຣິສ ຕຽນຫລາຍກຸ່ມອະທິຖານໃຫ້ໂລກພົບຄວາມສງົບສຸກ ແຕ່ສົງຄາມກໍເກີດຂຶ້ນໃນ ຫລາຍທີ່ຫລາຍບ່ອນ !...ສະນັ້ນ, ມີຫລາຍຄົນຈຶ່ງພາກັນສລຸບວ່າການອະທິຖານ ເປັນການໄຮ້ຜົນ.

ເພື່ອຕອບຕໍ່ຄວາມຂ້ອງໃຈອັນນີ້, ເຮົາຕ້ອງເຂົ້າໃຈວ່າຄຳສັນຍາຂອງພຣະ ເຈົ້າບໍ່ໄດ້ປັສຈາກຄຳ «ແຕ່ວ່າ» ເພາະບໍ່ແມ່ນວ່າເຮົາຈະໄດ້ທຸກຢ່າງທີ່ເຮົາຂໍ. ຄຳ ອະທິຖານບໍ່ແມ່ນຄາຖາວິເສດທີ່ເສກໃສ່ສິ່ງໃດ ສິ່ງນັ້ນກໍເກີດຂຶ້ນມາຕາມໃຈມັກ ໂລດ ! ຖ້າແມ່ນຄຳອະທິຖານຫາກເປັນຄືກັນກັບເວດມົນກົນຄາຖາ, ແນ່ນອນວ່າ ຜູ້ທີ່ເຂົ້າໃຈນຳພຣະທັງຂອງພຣະເຈົ້າຢ່າງຖືກຕ້ອງນັ້ນຈະບໍ່ຫານອະທິຖານຈັກ ເທື່ອເລີຍ ເພາະຢ້ານວ່າພຣະເຈົ້າຈະຊົງປະທານສິ່ງທີ່ບໍ່ຈຳເປັນ ພ້ອມທັງເປັນພິດ ເປັນພັຍຕໍ່ຊີວິດນັ້ນໃຫ້ແກ່ຕົນ ! ເນື່ອງຈາກວ່າພຣະເຈົ້າຜູ້ຊົງສະຖິດຢູ່ໃນສວັນຊົງ ດີພ້ອມທຸກຢ່າງ ພຣະອົງຈຶ່ງບໍ່ປະທານສິ່ງໃດທີ່ຈະນຳຄວາມຫາຍະນະມາສູ່ລູກ ຂອງພຣະອົງ ເຖິງແມ່ນວ່າລູກຫາກຮ້ອງຂໍຫລາຍປານໃດກໍຕາມ.

ປັດຈຸບັນນີ້, ມີຫລາຍຄົນຢາກທົດສອບເບິ່ງຣິດທານຸພາບຂອງພຣະເຈົ້າໂດຍ ການທ້າທາຍວ່າຖ້າພຣະເຈົ້າໃຫ້ຖືກ ໂລໂຕ ຖືກຫວຍ ເລກມ້າຫລືການພະນັນ ແນວອື່ນ ຈຶ່ງຈະເຊື່ອ ! ການທ້າທາຍຢ່າງນີ້ຊໍ່ໃຫ້ເຫັນແລ້ວວ່າເປັນການຂໍຜິດ ເພາະຢາກຈະນຳໄປໃຊ້ເພື່ອບຳເລີກິເລດຕັນຫາຂອງຕົນເອງເທົ່ານັ້ນ. ສະນັ້ນ, ທ່າທີອັນຖືກຕ້ອງແທ້ ກໍຄືໃຫ້ເຊື່ອວ່າການປະຕິເສດຂອງພຣະເຈົ້າກໍແມ່ນຄຳຕອບ ອັນນຶ່ງຂອງພຣະອົງເຊ່ນກັນ ເພາະພຣະອົງຊົງຊາບເຖິງຜົນພວງຕ່າງໆແນວດີ ຫລືບໍ່ດີທີ່ຈະຕາມຄຳຕອບນັ້ນໆມາໃນພາຍຫລັງ.

pleuvoir sur les justes et sur les injustes » (Matthieu 5.45). Par contre, en tant que Père, Dieu accorde son salut uniquement à ceux qui font appel à Lui, car « quiconque invoquera le nom du Seigneur sera sauvé » (Romains 10:12,13). Dieu accorde les «bonnes choses» à ceux qui lui demandent (Matthieu 7:11). Et ces bonnes choses sont le fruit de l'oeuvre du Saint-Esprit que le Père promet à ceux qui lui en font la demande (Luc 11:13), à savoir: le pardon du péché, la délivrance du pouvoir du mal, la paix, la foi, l'espérance et l'amour... nous devons donc demander ces choses à Dieu.

Même dans la prière type, le «Notre Père», Jésus semble nous encourager à demander aussi bien les biens qui qui sont du domaine de la création que ceux qui relèvent de la rédemption et du salut – le pain quotidien d'une part, le pardon du péché et la capacité à ne pas succomber à la tentation d'autre part.

3 - Est-ce que la prière est utile?

Il y a plus de 2000 ans que les chrétiens prient mais il semble que rien n'ait changé à la surface de la terre! Il y a des gens qui demandent des choses précises à Dieu sans recevoir de réponse à leur prière. Les étudiants demandent à Dieu de les aider quand ils doivent passer des examens, mais ils ne réussissent pas toujours pour autant. D'autres demandent la guérison... mais voient leur état de santé empirer. Les chrétiens eux-mêmes prient pour la paix dans le monde, mais cela n'empêche pas les guerres qui font rage dans plusieurs points du globe... Ce constat amène certains à la conclusion que la prière est bien inutile.

Comment répondre à toutes ces objections? Tout d'abord, nous devons comprendre que la promesse de Dieu n'est pas exempte de "mais" et que nous ne pouvons pas avoir tout ce que nous demandons. La prière n'est pas une baguette magique que nous agitons pour obtenir ce que notre coeur désire. Si la prière était une formule magique, il est certain que ceux qui comprennent bien la volonté de Dieu n'oseraient jamais prier, de peur que Dieu leur accorde des choses non indispensables qui pourraient se révéler nuisible dans leur propre vie! C'est parce que Dieu est amour et plein de bienveillance à l'égard de ses enfants qu'il ne les accorde pas n'importe quoi, même si ces derniers en ont vraiment besoin.

De nos jours, beaucoup de gens veulent éprouver la puissance de Dieu en lui lançant ce défi: «Si Dieu m'aide à gagner le gros lot au loto ou au tiercé, je croirai en Lui»! Cette sorte de défi illustre précisément une mauvaise manière de demander, car s'agit ici simplement d'assouvir ses propres passions. La juste attitude consiste donc à croire que le refus de Dieu de répondre à une telle demande est aussi une forme de réponse à notre

ຄ - ບົດຮຽນກ່ຽວກັບການອະທິຖານ

ເມື່ອອ່ານເບິ່ງແບບຜິວເຜີນເຖິງຄຳສັ່ງສອນຂອງພຣະເຢຊູໃນວັກນີ້ ກໍປາກົດວ່າການອະທິຖານເປັນການງ່າຍເຫລືອເກີນພຽງແຕ່ຂໍ, ຊອກ ເຄາະ ເທົ່ານັ້ນ ແລ້ວຄວາມປາຖນາທຸກຢ່າງກໍຈະກາຍເກີດຂຶ້ນມາເປັນຄວາມຈິງໄດ້ ! ແຕ່ໃນຄວາມເປັນຈິງແລ້ວ, ມີຫລາຍສິ່ງຫລາຍຢ່າງທີ່ເຮົາຕ້ອງຮຽນຮູ້ໃນການອະທິຖານ :

ປະການແຮກ, ເຮົາຕ້ອງເຂົ້າໃຈນຳ້ພຣະທັຍຂອງພະເຈົ້າເສັຍກ່ອນ ເພາະວ່າພຣະອົງຊົງປະທານສະເພາະແຕ່ສິ່ງທີ່ສອດຄ່ອງກັບນຳ້ພຣະທັຍຂອງພຣະເຈົ້າເທົ່ານັ້ນໃຫ້ແກ່ເຮົາ. ດັ່ງນັ້ນ, ພວກເຮົາຕ້ອງລົງທຶນໃຊ້ເວລາໃນການຄົ້ນຄວ້າຊອກຫານຳ້ພຣະທັຍນີ້ດ້ວຍການສຶກສາແລະໄຕ່ຕອງພຣະທັມຄຳພີອັນເປັນພຣະວັຈນະຂອງພຣະອົງ.

ປະການທີສອງ, ເຮົາຕ້ອງມີຄວາມເຊື່ອ. ການຮູ້ຈັກເຖິງນຳ້ພຣະທັຍຂອງພຣະເຈົ້າເປັນແນວນຶ່ງ ແຕ່ການເຊື່ອວ່າພຣະເຈົ້າຊົງສາມາດກະທຳໃຫ້ສຳເຣັດນຳ້ພຣະທັຍຂອງພຣະອົງນັ້ນກໍເປັັອີກເຣື່ອງນຶ່ງຕ່າງຫາກ. ພຣະທັມຄຳພີສອນວ່າ ຖ້າປັສຈາກຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະທັຍຂອງພຣະເຈົ້າບໍ່ໄດ້ເລີຍ (ເຮັບເຣີ 11 : 6)

ປະການທີສາມ, ກ່ອນເຮົາຈະເລີ້ມອະທິຖານທູນຂໍສິ່ງໃດສິ່ງນຶ່ງຈາກພຣະເຈົ້າ ເຮົາຕ້ອງມີຄວາມປາຖນາອັນແນ້ວແນ່ວ່າຢາກໄດ້ສິ່ງນັ້ນແທ້. ເຮົາອາດຈະຮູ້ຈັກນຳ້ພຣະທັຍຂອງພຣະເຈົ້າ, ຮູ້ຈັກວ່າພຣະເຈົ້າຊົງອຳນາດເພື່ອກະທຳໄດ້ ແຕ່ເຮົາບໍ່ຢາກໃຫ້ສິ່ງນັ້ນເກີດມີຂຶ້ນມາກໍໄດ້ ! ພຣະເຈົ້າໄດ້ຊົງຕັ້ງການອະທິຖານໄວ້ເພື່ອໃຫ້ພວກເຮົາສາມາດສະແດງຄວາມປາຖນາອັນເລິກເຊິ້ງອອກມາຈາກຫົວໃຈຂອງເຮົາໄດ້ (ໂຣມ 10 :1).

prière, car Dieu connaît les conséquences, bonnes ou mauvaises, qui peuvent s'en suivre.

La leçon de la prière

En lisant superficiellement ce passage superficiellement, on pourrait conclure que la prière est bien simple : il suffit de demander, de chercher et de frapper... et tous nos rêves se réalisent! Mais une lecture attentive nous montre tout ce qui nous reste à apprendre sur la prière :

Premièrement, nous devons apprendre à comprendre la volonté de Dieu. Dieu ne nous accorde en effet que ce qui est conforme à sa volonté. Nous devons donc investir du temps pour étudier la Bible et réfléchir à ce que nous enseigne la Parole de Dieu.

Ensuite, nous devons avoir la foi. Connaître la volonté de Dieu est une chose, mais croire vraiment que Dieu est capable de nous répondre en est une autre. La Bible nous dit que sans la foi, on ne peut pas plaire à Dieu (Héb 11:6).

Finalement, avant de commencer à demander quoi que ce soit à Dieu, nous devons avoir un ardent désir que nous le souhaitons réellement. Nous pouvons connaître la volonté de Dieu ou reconnaître sa toute-puissance, mais malgré tout il peut très bien arriver qu'au fond de nous-mêmes, nous ne soyons en fait pas vraiment prêts à recevoir ce que nous lui demandons. Si Dieu nous invite à la prière, c'est précisément pour nous permettre de pénétrer à l'intérieur de nous-mêmes et d'y découvrir les désirs les plus profonds qui se cachent au fond de notre coeur (Rom 10:1).



Réédition du catéchisme de préparation au baptême d'Hermann Christen

Le catéchisme d'Hermann Christen, **«Seigneur, je désire être ton disciple»**, a été réédité par la Maison de la Bible. Cette nouvelle édition, légèrement revue et augmentée, comporte maintenant 12 leçons bibliques pour préparer au baptême. Ces leçons parcourent l'essentiel de la doctrine chrétienne, sous forme de questions qui se réfèrent aux différents textes bibliques qui la fondent. Un espace blanc est prévu pour les réponses. Le texte se prête aussi bien au travail individuel qu'au travail en groupe.

L'ouvrage peut être commandé à la rédaction de *Contact* pour le prix de 8 €, port compris.

ວັນເຂືອນສົມບັດ

Etats-Unis

❖ ຕົ້ນເດືອນພຶສພາທີ່ຜ່ານມານີ້, ຄອບຄົວ ຢາງສຸ ແລະພີ່ນ້ອງຄຣິສ ຕຽນ, ຜູ້ຮັບໃຊ້ພຣະເຈົ້າອີກຄອບຄົວ ນຶ່ງຈາກຣັດ ຈໍເຈັ ອະເມຣິກາ ໄດ້ມາແວ່ຢ້ຽມຢາມຄອບຄົວຂອງພວກ ຂ້າພະເຈົ້າກ່ອນຈະເດີນທາງຕໍ່ລົງໄປທາງພາກໃຕ້. ຄອບຄົວ ຢ່າງສຸ ໄດ້ຍ້າຍ ຈາກຝຣັ່ງເສດໄປຢູ່ອະເມຣິກາຕັ້ງແຕ່ປີ 1990 ແຕ່ຂ້າພະເຈົ້າກໍສັງເກດເຫັນ ໄດ້ວ່າພວກເພິ່ນຍັງຈົດຈຳພາສາຝຣັ່ງເສດໄດ້ເປັນຢ່າງດີ ແລະໃນໄລຍະສິບ ກວ່າປີນີ້ ຜູ້ກ່ຽວຍັງຮັກສາການຕິດຕໍ່ພົວພັນກັບພວກຂ້າພະເຈົ້າສເມີມາ ຊຶ່ງ ກົງກັນຂ້າມກັບຫລາຍໆຄອບຄົວທີ່ກ່ອນຈະຈາກກັນໄປໄດ້ສັນຍາວ່າຈະສົ່ງ ຂ່າວໃຫ້ຊາບເປັນປະຈຳ ແຕ່ແລ້ວກໍງຽບຫາຍໄປປານກັນກັບຫອຍໄຂ້!

❖ ໜ້າເສັຍດາຍທີ່ພາດໂອກາດມາຮ່ວມພິທີແຕ່ງງານຂອງພີ່ນ້ອງຊັ້ນຈຳຢູ່ ອະເມຣິກາເມື່ອທ້າຍເດືອນພຶສພາທີ່ຜ່ານມານີ້. ຖ້າແມ່ນວ່າບໍ່ຄາວກ ຈຳເປັນຢູ່ຝຣັ່ງເສດ ກໍຄົງຈະໄດ້ພົບກັນກັບພີ່ນ້ອງ ແລະໝູ່ເພື່ອນຫລາຍໆຄົນ ທີ່ມາຈາກຫລາຍໆຣັດ ແລະຈາກປະເທດ ການາດາ ອີກດ້ວຍ. ຂ້າພະເຈົ້າ ເຊື່ອແນ່ວ່າໂອກາດໜ້າຍັງຈະມີໃໝ່ອີກເພື່ອພົບພໍ້ ແລະໂອ້ລົມກັນໄດ້ຢ່າງ ເຖິງອົກເຖິງໃຈ!

Au début du mois de mai dernier, Monsieur et Madame Yang Sou de Jesserson en Géorgie (Etats-Unis), ainsi qu'un pasteur Hmong et sa femme, sont venus nous rendre visite avant de poursuivre leur chemin vers le sud de la France. Monsieur Yang Sou à émigré aux Etats-Unis avec sa famille en 1990, mais il parle encore très bien le français. Depuis une dizaine d'années, nous nous gardons contact régulièrement par courrier ou par téléphone – contrairement à bien d'autres familles Hmong, qui nous avaient promis, avant de quitter la France, de nous donner de leurs nouvelles, des nouvelles que nous attendons toujours à ce jour...!!

❖ J'ai beaucoup de regret de ne pas avoir pu assister à la cérémonie de mariage de ma cousine à Roshester aux Etats-Unis le 26 mai dernier. Si j'avais pu y aller, j'aurais eu le plaisir de de rencontrer bien des familles et des amis venant de plusieurs endroits, y compris le Canada. Ce n'est que partie remise, et je suis convaincu que d'autres occasions se présenteront bien un jour ou l'autre.

Contact continue...

❖ ຕໍ່ ຈາກໜັງສືຢ້ຽມຢາມທີ່ ພວກ ຂ້າພະເຈົ້າໄດ້ສົ່ງໄປໃຫ້ຜູ້ອ່ານໃນຕົ້ນ ເດືອນເມສາ ທີ່ຜ່ານມານີ້, ມີຫລາຍໆ ຄຳຕອບທີ່ສນັບສນຸນໃຫ້ພວກຂ້າພະເຈົ້າສືບຕໍ່ພິມວາຣະສານ ແລະກໍມີຜູ້ ອ່ານຫລາຍໆທ່ານເຊ່ນກັນທີ່ບໍ່ມີຄວາມປະສົງຢາກຈະຮັບຕໍ່ໄປອີກ; ບາງ ທ່ານກໍໄດ້ບອກເຖິງສາຍເຫດທີ່ພາໃຫ້ຈັບຈ່ອງຕໍ່ໄປບໍ່ໄດ້ນັ້ນໃຫ້ພວກ ຂ້າພະເຈົ້າຟັງຢ່າງແຈ່ມແຈ້ງ. ໃນກໍຣະນີນີ້, ພວກຂ້າພະເຈົ້າກໍມີການ ຜ່ອນຜັນ ແລະຍັງຈະສືບຕໍ່ສົ່ງໄປໃຫ້ ເພາະເຂົ້າໃຈໄດ້ດີເຖິງສະພາບການ ເປັນຢູ່ເມື່ອມີການຫວ່າງງານ ຫລືການເຈັບໄຂ. ຢ່າງໃດກໍຕາມ, ພວກ ຂ້າພະເຈົ້າຂໍຂອບໃຈນຳຜູ້ອ່ານທຸກໆທ່ານທີ່ໄດ້ໃຫ້ຄວາມຮ່ວມມືໂດຍການ ຕອບຈົດໝາຍ ຊຶ່ງໄດ້ຊ່ວຍໃຫ້ພວກຂ້າພະເຈົ້າເຫັນແຈ້ງກ່ຽວກັບອະນາຄົດ ຂອງວາຣະສານ ຄວາມສັມພັນ.

❖ ໃນໃບຢັ້ງສງ່ານັ້ນ, ມີຄວາມສເນີໃຫ້ນຳເອົາເຣື້ອງວັນນະຄະດີ, ຮີດຄອງ ປະເພນີ, ການປຸງແຕ່ງອາຫານແບບລາວໆ, ຄຳແນະນຳກ່ຽວກັບຊີວິດປະຈຳ ວັນ, ຂ່າວຈາກເມືອງລາວ ५५५ ມາລົງໃນວາຣະສານ ຄວາມສັມພັນ. ຄຳສ ເນີເຫລົ່ານີ້ກໍເປັນໜ້າສົນໃຈຫລາຍ ຫາກແຕ່ວ່າມີບໍ່ນໍຜູ້ທີ່ຢາກຈະຮ່ວມໄມ້

Les avis des lecteurs que nous avons reçus par retour du sondage sont assez divers: les uns nous demandent de mettre plus de littérature, d'articles sur les coutumes et la culture, avec des recettes de cuisine laotienne... D'autres aimeraient plus les conseils pratiques, de nouvelles du Laos, d'articles sur le savoir-vivre dans la société... Toutes ces suggestions sont très intéressantes, mais cela nous pose une question : y aurait-il quelqu'un parmi nos lecteurs qui serait prêt à nous aider en prenant en charge une de ces rubriques proposées et à nous

ຮ່ວມມືໂດຍການສົ່ງບົດຂຽນກ່ຽວກັບດ້ານໃດດ້ານນຶ່ງທີ່ກ່າວມາຂ້າງເທິງນີ້ ໄປໃຫ້ພວກຂ້າພະເຈົ້າເປັນປະຈຳ? ສຳລັບພວກຂ້າພະເຈົ້າເອງແລ້ວ ເປີດກວ້າງຢູ່ສເມີແລະຍິນດີຮັບເອົາບົດຂຽນນັ້ນໆ ຂໍພຽງແຕ່ໃຫ້ເຮັດຢ່າງສມ່ຳສເມີ.

❖ ບໍ່ພຽງແຕ່ເຫັນຄຳຍ້ອງຍໍຊົມເຊີຍດ້ວຍທາງຄຳຕອບແຕ່ເທົ່ານັ້ນ, ຫວ່າງບໍ່ດົນມານີ້ເພື່ອນໆກໍບອກວ່າພວກຂ້າພະເຈົ້າອຶດທົນເຮັດມາໄດ້ດົນ ທັງເຮັດໄດ້ດີອີກດ້ວຍ! ສິງສັຍວ່າເປັນການຕຳໜາກຍໍຫລາຍກວ່າຕື໊ບໍ! ເພາະພວກຂ້າພະເຈົ້າກໍສັງເກດໄດ້ຄືກັນວ່າມີວາຣະສານພາສາລາວຂອງສະມາຄົມອື່ນໆ ກໍເຮັດໄດ້ດີ ທັງຈັບງາມກວ່າ ຄວາມສັມພັນ ຕັ້ງຫລາຍເທົ່າ! ແມ່ນຢູ່, ເມື່ອເວົ້າເຖິງອາຍຸ, ຄວາມສັມພັນ ອາດຈະມີອາຍຸແກ່ກວ່າວາຣະສານອື່ນໆ ທີ່ເກີດຂຶ້ນໃນຕ່າງປະເທດພາຍຫລັງປີ 1975 ເປັນຕົ້ນມາກໍອາດຈະເປັນໄດ້. envoyer régulièrement de la matière? De notre côté, nous sommes ouverts à toutes propositions et heureux de publier à condition que l'auteur nous envoie régulièrement une contribution.

❖ Nous sommes encouragés à poursuivre notre travail, non seulement à cause des réponses reçues suite au sondage, mais dernièrement, beaucoup d'amis nous ont félicité de notre persévérance et du choix de certains articles. Est-ce simplement pour nous faire plaisir? Car nous constatons nous-mêmes qu'il existe d'autres publications laotiennes qui sont mieux présentées que notre magazine «Contact». Il est vrai que nous pouvons en tout cas être fier de notre âge car, nous sommes actuellement le seul magazine né à l'étranger peu après 1975 et qui ait pu poursuivre sans interruption, contre vents et marées, jusqu'à ce jour.

France

Les deux époux décidèrent alors de prendre l'écorce de l'arbre où se trouvait l'eau ainsi que celle du tamarinier sauvage et du *mak sommo*. Après avoir fait une grande provision, ils revinrent chez eux, broyèrent les écorces, les mirent avec les grains de riz fermenté dans des jarres pleines d'eau qu'ils vendirent aux habitants de *Muong Khassy*. On acheta de grandes quantités de la liqueur.

A partir de ce moment il y eut dans le pays de nombreuses querelles, des rixes et des assassinats. Les deux époux sur l'ordre du Roi durent se sauver à *Muong Phalanasy*.

Les habitants de ce *Muong* demandèrent au couple pourquoi ils venaient se réfugier dans le pays. Les époux répondirent que, ayant fabriqué une liqueur enivrante, ils la vendirent aux gens de *Muong Khassy*, que ceux-ci s'enivrèrent, se querellèrent entre eux et qu'eux-mêmes s'étaient sauvés de peur d'être punis.

Le bruit que les deux époux savaient fabriquer une liqueur enivrante se répandit dans la ville et parvint aux oreilles du Roi qui fit aussitôt mander les étrangers, leur dit qu'il voulait goûter de cette liqueur et leur ordonna d'en fabriquer.

L'ordre fut exécuté. *Soula* et sa femme vinrent offrir de la liqueur au Roi, puis ils en fabriquèrent de grandes quantités pour en vendre au public. Ici aussi, disputes et rixes de se donner libre cours.

Ayant peur d'être condamnés à *Muong Phalanasy* comme ils auraient pu l'être dans leur ancien domicile, ils partirent pour *Muong Savaty* où régnait *Phaya Sompha Metalat*. Ce Roi, ayant appris le talent des deux époux réfugiés dans ses Etats, les fit appeler et leur commanda cinq cents jarres de leur liqueur.

Les jarres, fut quelque temps après, apportées au Roi qui, voulant voir si le liquide était vraiment de la liqueur et non du poison, fit attacher à côté des cinq

ແລະດື່ມແລ້ວ, ກໍເມົາເຊ່ນດຽວກັນ. ນາຍພານກັບມາເຖິງເຮືອນກັບນ້ຳເມົາທີ່ເຫລືອໄວ້ຢູ່. ລາວເອົາໃຫ້ໝູ່ຂອງດື່ມນຳ ແລະໝູ່ຜູ້ນີ້ກໍໄດ້ລາຍງານໃຫ້ກະສັດຮູ້ນຳເຖິງການຄົ້ນພົບຂອງນາຍພານ ສຸລາ.

ສະນັ້ນ, ກະສັດຈຶ່ງສັ່ງໃຫ້ ສຸລາ ໄປພົບຢູ່ວັງ ທັງບອກວ່າຢາກຈະຊິມຣົດຊາດຂອງນ້ຳວິເສດທີ່ລາວຖືມາ. ເມື່ອດື່ມແລ້ວ, ກະສັດກໍເມົາເຖິງສາມມື້ສາມຄືນ. ຫລັງຈາກຊ່ວງຈາກພິດເຫລົ້າແລ້ວກະສັດເລີຍໃສ່ຊື່ນ້ຳວິເສດນີ້ວ່າ ສຸລາ ໂດຍລະນຶກເຖິງຜູ້ທຳອິດທີ່ໄດ້ຄົ້ນພົບ.

ເມື່ອນ້ຳທິບໃນເຕົ້າໝົດແລ້ວ, ກະສັດກໍໄດ້ອອກຄຳສັ່ງໃຫ້ ສຸລາ ກັບຄືນໄປເອົາອີກຫລາຍໆຄັ້ງ ຈົນວ່າລາວອິດເມື່ອຍຈຶ່ງໄດ້ຕັດສິນໃຈວ່າຈະຜະລິດນ້ຳທິບນີ້ດ້ວຍຕົນເອງ.

ສະນັ້ນ, ລາວຈຶ່ງເອົາເມັຍຂອງລາວເຂົ້າໄປໃນປ່ານຳເພື່ອສັງເກດວ່ານ້ຳພິດນີ້ເກີດມີມາໄດ້ຢ່າງໃດ. ເມື່ອມາເຖິງກ້ອງຕົ້ນໄມ້, ທັງສອງກໍພາກັນປີນຂຶ້ນໄປເບິ່ງໂກນໄມ້ເພື່ອຢາກຮູ້ວ່າມີຫຍັງແດ່ຢູ່ໃນນັ້ນ. ພວກເຂົາຈຶ່ງໄດ້ພົບໝາກຂາມປ່ຳ, ໝາກສົ້ມມໍ ແລະເມັດເຂົ້າເປືອກ.

ສອງຜົວເມັຍຈຶ່ງພາກັນຖາກເອົາເປືອກໄມ້ຕົ້ນນັ້ນ ແລະເປືອກຂອງຕົ້ນຂາມປ່ຳແລະຕົ້ນສົ້ມມໍນຳອີກ. ເມື່ອເອົາໄດ້ຢ່າງພຽງພໍແລ້ວ ຈຶ່ງພາກັນກັບຄືນບ້ານແລ້ວຕຳເປືອກໄມ້ເລົ່ານີ້ ແລະເອົາເມັດເຂົ້າເປືອກປົນລົງໃສ່ກັບນ້ຳກ່ອນຈະອັດໄວ້ໃນໄຫ ແລ້ວກໍໄດ້ຂາຍນ້ຳເມົານີ້ໃຫ້ແກ່ຄົນຊາວເມືອງກາສີທີ່ໄດ້ພາກັນຊື້ຢ່າງຫລວງຫລາຍ.

ນັບຕັ້ງແຕ່ນັ້ນເປັນຕົ້ນມາ, ຢູ່ໃນປະເທດກໍເກີດມີການຜິດຖຽງກັນ, ການຕ່ອຍຕີ ແລະສັງຫານກັນລະຫວ່າງຊາວເມືອງຫລາຍຂຶ້ນກວ່າເກົ່າ. ສະນັ້ນ, ກະສັດຈຶ່ງສັ່ງໃຫ້ເນຣະເທດທັງສອງຜົວເມັຍໜີໄປຢູ່ເມືອງພາລານະສີ.

ຊາວເມືອງນີ້ຈຶ່ງພາກັນສໍ້ຖາມວ່າເປັນຫຍັງສອງຜົວເມັຍຈຶ່ງພາກັນມາອາສັຍຢູ່ເມືອງຂອງພວກເຂົາ. ສອງຜົວເມັຍຈຶ່ງຕອບວ່າຍ້ອນພວກເຂົາຜະລິດນ້ຳມຶນເມົາເພື່ອຂາຍໃຫ້ຊາວເມືອງ ຈຶ່ງເກີດມີການຜິດຂ້ອງຕ້ອງຖຽງແລະທະເລາະວິວາດກັນ, ຍ້ອນພວກເຂົາຢ້ານຖືກໂທດຈຶ່ງພາກັນປົບໜີໄປທາງອື່ນ.

ຄວາມຊ່ຳລືວ່າສອງຜົວເມັ່ງຮູ້ວິທີຜະລິດນ້ຳເມົາເປັນກໍໄດ້ແຜ່ໄປທົ່ວເມືອງ ຈົນມາເຖິງຫູຂອງພະຣາຊາທີ່ໄດ້ອອກຄຳສັ່ງໃຫ້ພວກເຂົາຜະລິດນ້ຳເມົານີ້ເພື່ອຢາກຊິມເບິ່ງຣົດຊາດຂອງມັນ.

ສອງຜົວເມັ່ງຈຶ່ງປະຕິບັດຕາມຄຳສັ່ງທັນທີ ແລ້ວ ສຸລາ ກັບ ເມັຍຂອງລາວ ກໍໄດ້ມາຖວາຍນ້ຳເມົາໃຫ້ກະສັດ ແລະຍັງພາກັນຜະລິດຢ່າງຫລວງຫລາຍເພື່ອຂາຍໃຫ້ປະຊາຊົນນຳອີກດ້ວຍ. ຢູ່ທີ່ນີ້ກໍເຊ່ນກັນ, ໄດ້ເກີດມີການຜິດຖຽງ ຊິກຕ່ອຍກັນຂຶ້ນຢ່າງຄວບຄຸມບໍ່ໄດ້ເລີຍ.

ຍ້ອນເກີດມີຄວາມຢ້ານຈະຖືກລົງໂທດຢູ່ເມືອງ ພາລານະສີ ດັ່ງດຽວກັນກັບພວກເຂົາອາດຈະຖືກຢູ່ເມືອງເດີມຂອງພວກເຂົາ, ທັງສອງຜົວເມັຍຈຶ່ງພາກັນຍ້າຍໜີໄປອາສັຍຢູ່ເມືອງ ສາວະຕີ ບ່ອນທີ່ພະຍາ ສົມພະເມດຕະລາດ ປົກຄອງຢູ່. ເມື່ອກະສັດຮູ້ຈັກເຖິງຄວາມສາມາດຂອງສອງຜົວເມັຍນີ້ແລ້ວ, ພະອົງຈຶ່ງສັ່ງໃຫ້ພວກເຂົາເຮັດເຫລົ້າໃຫ້ຕົນຫ້າຮ້ອຍໄຫໄພ.

ຫລັງຈາກນັ້ນມາບໍ່ນານ, ໄຫທັງຫ້າຮ້ອຍໜ່ວຍກໍຖືກນຳສົ່ງໃຫ້ກະສັດ. ເພື່ອຢາກຮູ້ວ່ານ້ຳເມົານີ້ບໍ່ເປັນພິດພັຍອັນຕະຣາຍໃດໆ, ກະສັດຈຶ່ງສັ່ງໃຫ້ມັດ

cents jarres des singes et des chats. Ceux-ci léchèrent la liqueur qui coulait le long des vases, s'enivrèrent et tombèrent à terre.

Les courtisans vinrent rapporter le fait au Roi. Celui-ci, craignant d'être empoisonné, ordonna à son bourreau d'aller arrêter les deux époux et de les exécuter.

Il dit en outre aux courtisans de jeter le contenu des jarres.

Nos deux compères demandèrent à voir le Roi. Celui-ci consentit à écouter leurs explications. Ils dirent que leur liqueur n'était pas dangereuse et ne faisait qu'endormir les gens qui en prenaient de trop copieuses rasades.

Phaya Sompha Metalat maintint néanmoins sa sentence. Or, pendant que l'on conduisait les époux au lieu d'exécution, les singes et les chats, tout à l'heure étendus sans vie sur le sol, se relevèrent et se mirent à marcher tristement.

Le Roi s'en rendit compte et fut convaincu que la liqueur n'était pas du poison. Il grâcia le couple puis, voulant offrir une fête à ses ministres et leur donner à goûter le nouveau breuvage, il ordonna à ses courtisans de faire construire de grands hangars où la foule viendrait s'abriter. L'on but, l'on dansa. Chacun au comble de la joie.

Pendant ce temps, *Phaya In*, le génie, planait dans l'air. Il voulut donner conseil à *Phaya Sompha Metalat* ainsi qu'à ses ministres. Il leur apparut sous la forme d'un brahmane portant dans ses mains une jarre de liqueur et alla la placer devant le Roi. Il lui dit que cette liqueur produisait de mauvais effets sur l'homme comme sur la femme et leur faisait commettre des péchés.

L'homme ivre, dit-il, chancelle, ne voit plus, risque de tomber dans un fleuve ou dans un fossé s'il passe à côté; il devint irascible, querelleur, rien ne l'effraie; il ne sait ni ce qu'il fait, ni ce qu'il dit; s'il est nu, il ne s'en aperçoit pas et on l'insulte sans qu'il comprenne rien; puis, lorsque son ivresse est dissipée, il entend raconter ce qu'il a fait alors qu'il était pris de boisson. Il en a honte.

Le Roi *Sompha Metalat*, après avoir écouté les paroles de *Phaya In*, eut peur de commettre un péché, aussi demanda t-il au génie de ce que contenait sa jarre. *Phaya In* répondit qu'elle était pleine d'un liquide enivrant et que ceux qui en buvaient commettaient un grand nombre de péchés. *Sompha Metalat* demanda encore au faux brahmane qui il était, lui disant que pour le récompenser de son conseil, il alla lui donner cent éléphants, cent chevaux, cent esclaves, cent boeufs et cent charrettes.

Phaya In répondit au Roi qu'il était un génie venu pour l'éclairer. Il lui recommanda de ne pas boire de cette liqueur fermentée s'il ne voulait pas commettre de péché mais aller au ciel. Il lui dit de boire de la sève de canne à sucre ou de palmier ainsi que le suc de miel, de manger du poisson, des gâteaux et autres aliments puis il disparut.

ລີງກັບແມວໄວ້ໃກ້ໆກັບໄຫໄພ ຫ້າຮ້ອຍໜ່ວຍ. ສັດເລົ່ານີ້ໄດ້ເລັຍກິນນ້ຳທີ່ໄຫລ ອອກຈາກໄຫ ຈຶ່ງພາກັນເມົາແລະລົ້ມນອນລົງກັບທີ່.

ພວກເສນາອາມາດທັງຫລາຍຈຶ່ງພາກັນມາໃຫ້ການແກ່ກະສັດ.ຍ້ອນຄິດ ຢ້ານວ່າຈະຖືກເບື່ອເມົາ, ກະສັດຈຶ່ງໄດ້ສັ່ງໃຫ້ປະຫານຊີວິດຂອງສອງຜົວເມັຍ ນັ້ນຖິ້ມເສັຍ. ແລະພະອິງຍັງສັ່ງໃຫ້ຖອກນ້ຳທີ່ບັນຈຸໃນໄຫເຫລົ່ານີ້ຖິ້ມໃຫ້ໝົດ.

ກ່ອນຈະຖືກປະຫານ, ສອງຜົວເມັຍໄດ້ຂໍຮ້ອງຢາກຈະເຂົ້າພົບກະສັດກ່ອນ ຈະຕາຍ ແລະກະສັດກໍຍອມຟັງຄຳໃຫ້ການຂອງທັງສອງ. ພວກເຂົາກ່າວວ່ານ້ຳ ນີ້ບໍ່ເປັນອັນຕະຣາຍເຖິງຕາຍ ພຽງແຕ່ທຳໃຫ້ຜູ້ທີ່ດື່ມມຶນເມົາແລະນອນຫລັບ ໄປເທົ່ານັ້ນ.

ເຖິງປານນັ້ນ, ພະຍາ ສົມພະເມດຕະລາດກໍຍັງບໍ່ປ່ຽນພະໄທໃນການ ຕັດສິນ. ແຕ່ຫາກວ່າພໍເມື່ອເພັດຊະຄາດນຳເອົາທັງສອງຜົວເມັຍໄປປະຫານ, ລີງກັບແມວຊຶ່ງຫວ່າງນຶ່ງນີ້ພາກັນນອນຢຽດຢູ່ພື້ນ, ກໍໄດ້ຟື້ນຄືນຂຶ້ນມາແລະ ພາກັນຍ່າງແບບໂຊເຊ.

ສະນັ້ນ, ພະຍາຈຶ່ງແນ່ໃຈວ່ານ້ຳນີ້ບໍ່ແມ່ນຢາເບື່ອແຕ່ຢ່າງໃດ ຈຶ່ງໄດ້ສັ່ງໃຫ້ ເລີກໂທດຂອງສອງຜົວເມັຍ. ນອກນັ້ນ, ພະຍາຍັງມີພະປະສົງຢາກຈະຈັດງານ ໃຫ້ກັບພວກເສນາອາມາດທັງຫລາຍແລະຢາກຈະໃຫ້ພວກເຂົາຊີມຣົດຂອງນ້ຳ ນີ້ ຈຶ່ງໄດ້ສັ່ງໃຫ້ປຸກໂຮງໃຫຍ່ໆ ເພື່ອຝູງຄົນຈະມາຮ່ວມໄດ້. ໃນງານນັ້ນ, ໃຜໆກໍ ດື່ມ, ກໍຟ້ອນລຳທຳເພງຢ່າງມ່ວນຊື່ນລື້ນເລີງຈົນໝົດຈິດໝົດໃຈ.

ຂະນະດຽວກັນກັນ, ພະຍາອິນ ທີ່ບິນເວີ່ນຢູ່ເທິງເວຫາອາກາດ ແລະຢາກ ຈະໃຫ້ຄຳແນະນຳແກ່ພະຍາ ສົມພະ ເມດຕະລາດ ພ້ອມດ້ວຍເສນາອາມາດ ທັງຫລາຍ. ພະຍາອິນ ຈຶ່ງໄດ້ປອມຕົວເປັນ ພາມ ທີ່ຖືໄຫເຫລົ້ໍາໄປວາງໄວ້ ຕໍ່ໜ້າພະຍາ. ພາມ ໄດ້ເວົ້າກັບພະຍາວ່ານ້ຳນີ້ຈະນຳເອົາພິດພັຍບໍ່ດີມາສູ່ຜູ້ ຊາຍຫລືຜູ້ຍິງເພື່ອໃຫ້ພວກເຂົາເຮັດຜິດທຳບາບໄດ້. ພາມຍັງເພີ່ມເຕີມອີກວ່າ: ຄົນມຶນເມົາຈະຍ່າງເຊຍ່ໆຊວນ; ບໍ່ເຫັນຮຸ່ງທາງເດີນ; ລາວອາດຈະຕົກຮ່ອງຕົກ ຕະຄອງ; ລາວຈະກາຍມາເປັນຄົນໂກດຮ້າຍ, ຄົນມັກຜິດຖຽງ ແລະຈະບໍ່ຢ້ານ ກົວຕໍ່ສິ່ງໃດ; ລາວຈະບໍ່ຮູ້ເມື່ອວ່າລາວເຮັດຫຍັງຫລືເວົ້າຫຍັງ; ຖ້າແມ່ນລາວ ເປືອຍຕົວລາວກໍຈະບໍ່ຮູ້ເມື່ອຊ້ຳ ແລະຖ້າແມ່ນມີຄົນດ່າ ລາວກໍຈະບໍ່ເຂົ້າໃຈ ຫຍັງຊ້ຳ. ພໍເມື່ອຊ່ວງເຫລົ້ໍາມາແລ້ວ, ເມື່ອຄົນເລົ່າສະພາບຂອງລາວໃຫ້ລາວ ເອງຟັງ ລາວກໍເກີດຄວາມອັບອາຍຂາຍໜ້າທີ່ສຸດ.

ຫລັງຈາກໄດ້ຟັງຄຳອະທິບາຍຂອງພະຍາອິນແລ້ວ, ພະຍາ ສົມພະ ເມດ ຕະລາດ ຈຶ່ງເກີດຢ້ານວ່າຈະຕົນຈະເຮັດບາບ ຈຶ່ງໄດ້ໄຕ່ຖາມພະຍາອິນເຖິງສິ່ງ ທີ່ບັນຈຸຢູ່ໃນໄຫນັ້ນ. ພະຍາອິນບອກວ່າແມ່ນນ້ຳມຶນເມົາ ແລະຜູ້ໃດທີ່ດື່ມຈະ ຕ້ອງເຮັດບາບຢ່າງໃຫຍ່ຫລວງ. ພະຍາ ສົມພະ ເມດຕະລາດ ຍັງຖາມ ພາມ ປອມຜູ້ນັ້ນຕໍ່ໄປອີກວ່າລາວແມ່ນຜູ້ໃດກັນແທ້. ເພື່ອເປັນການສົມມະນາບຸນຄຸນ ຕໍ່ຄຳແນະນຳອັນດີ, ພະຍາຈະມອບຊ້າງຮ້ອຍຕົວ, ມ້າຮ້ອຍຕົວ, ຂ້າໃຊ້ຮ້ອຍ ຄົນ, ງົວຮ້ອຍໂຕ ແລະກວ່ຽນອີກຮ້ອຍລຳໃຫ້ເປັນຂອງຂວັນ.

ພະຍາອິນໄດ້ຕອບກະສັດວ່າຕົນເປັນເທວະດາທີ່ໄດ້ຖືກສົ່ງມາເພື່ອເປີດຕູ ເປີດຕາໃຫ້. ພະຍາອິນຍັງສັ່ງອີກວ່າບໍ່ໃຫ້ດື່ມນ້ຳມຶນເມົາຕໍ່ໄປອີກຖ້າບໍ່ຢາກທຳ ຜິດເຮັດບາບ ແລະຖ້າຢາກຂຶ້ນສວັນ. ພະຍາອິນ ຍັງສັ່ງໃຫ້ພະຍາ ສົມພະ ເມດ

Le Roi ordonna de jeter la liqueur enivrante puis fit pénitence avec ses ministres et tous, après leur mort, allèrent au ciel.

Le code tire de ce bel exposé deux conséquences plus religieuses que pénales:

1. Celui qui offre des liqueurs enivrantes à un bonze commet un péché.
2. Celui qui organise une procession solennelle à la pagode (*Boun Wat*) pour offrir des vêtements aux bonzes ou qui pendant la fête de l'ordination des bonzes (*Boun Bouat*) donne aux assistants une liqueur enivrante commet un péché.

Extrait de l'ouvrage «Pages Laotiennes», Notes de voyage d'André Raquez, F.-H. Schneider, imprimeur-éditeur, Hanoi, 1902 – pp. 441-445

ຕະລາດ ໃຫ້ດື່ມນ້ຳອ້ອຍ ຫລືນ້ຳຕານ ຫລືນ້ຳເຜິ້ງແທນ ແລະໃຫ້ກິນປາ, ກິນຂນົມ ແລະອາຫານແນວອື່ນໆ ແລ້ວພະຍາອິນ ກໍຫາຍຕົວໄປ.

ດັ່ງນັ້ນ, ພະຍາຈຶ່ງໄດ້ອອກຄຳສັ່ງໃຫ້ເທນ້ຳມຶນເມົານີ້ຖິ້ມຈົນໝົດ ແລ້ວກໍໄດ້ພາກັນຈຳສິນກັບພວກເສນາອາມາດທັງຫລາຍ. ຫລັງຈາກຕາຍໄປແລ້ວ, ພວກເຂົາກໍໄດ້ຂຶ້ນສວັນ.

ເຣື່ອງນີ້ໄດ້ສລຸບໃຫ້ເປັນກົດເກນສອງຂໍ້ທີ່ມີເນື້ອນັຍທາງສາສນາຫລາຍກວ່າທາງດ້ານກົດໝາຍຄື:

1. ຜູ້ໃດທີ່ເຄນນ້ຳມຶນເມົາໃຫ້ພະສົງອົງຄະເຈົ້າຈະຖືວ່າເປັນບາບ
2. ຜູ້ໃດທີ່ຈັດງານແຫ່ແທນຢູ່ໃນວັດ (ໃນຍາມບຸນວັດ) ເພື່ອຖວາຍຈີວອນຕ່າງໆໃຫ້ພະສົງອົງຄະເຈົ້າ ຫລືໃນງານບຸນບວດ ໄດ້ເອົານ້ຳມຶນເມົາໃຫ້ຜູ້ມາຮ່ວມດື່ມ ຜູ້ນັ້ນກໍກະທຳບາບເຊ່ນກັນ.

Légende laotienne

ເຣື້ອງ ແມ່ນ້ຳຂອງ ແລະແມ່ນ້ຳເຈົ້າພະຍາ

Légende du Mékong et de la Mènam

ແຕ່ກ່ອນກີ້ພຸ້ນ, ເພິ່ນກ່າວໄວ້ວ່າ : ຢູ່ຮ່ອງຮູ ຢູ່ໜອງຫ້ວຍຂອງພູຜາຊຶ່ງເປັນບໍ່ຫົວນ້ຳແມ່ນ້ຳຂອງແລະແມ່ນ້ຳເຈົ້າພະຍາທີ່ໄຫລຜ່ານເມືອງລາວແລະເມືອງໄທໃນປັດຈຸບັນນີ້, ໄດ້ມີພະຍານາກສອງຕົວທີ່ເປັນເພື່ອສະໜາຍຮັກແພງກັນທີ່ສຸດ. ເຂົາເຈົ້າເປັນພະຍານາກທີ່ມີຊື່ວ່າ ສວັນນະນາກ ແລະ ກຸດໂທພະນາກ. ພະຍານາກສອງຕົວນີ້ເຄີຍໄປມາຫາກັນ, ເຄີຍເອົາເຄື່ອງຢູ່ຂອງກິນຊຶ່ງເຂົາເຈົ້າໂຮ່ໄດ້ນັ້ນມາແບ່ງປັນກັນເລື້ອຍໆ. ແມ່ນວ່າ ກຸດໂທພະນາກ ເປັນນາກທີ່ມີໃຈບໍ່ໃຄ່ອະລິອະລອບ ແລະມັກໄດ້ມັກດີກວ່າ ສວັນນະນາກ ກໍດີ, ການພິວພັນຂອງສອງສະໜາຍກໍບໍ່ເຄີຍເກີດການເປັນການຜິດການຖຽງກັນຢ່າງຮຸນແຮງ ; ກົງກັນຂ້າມ, ສ່ວນມາກເຂົາທັງສອງມັກຫລິ້ນນ້ຳແລະຍອກຫົວກັນ.

ແຕ່ມີມື້ນຶ່ງ, ສອງພະຍານາກເລີຍເກີດຜິດຖຽງກັນຍ້ອນວ່າໃຜກໍວ່າໃຜໄດ້ເອົາຂອງຕ້ອນ ຂອງຂວັນໃຫ້ຫລາຍກວ່າກັນ ; ເຂົາຕົກລົງກັນວ່າການແບ່ງຂອງໂຮ່ມານັ້ນບໍ່ທ່ຽງກັນ. ໃນນາມທີ່ເຄີຍເປັນໝູ່ກັນ, ເຂົາເຈົ້າກໍພ້ອມກັນແກ້ໄຂບັນຫາໂດຍສັນຕິວິທີ ແລະພາກັນນົບນ້ອມໃຫ້ພະຍາແຖນເປັນຜູ້ຕັດສິນ.

ພະຍາແຖນລົງມາແຕ່ຟ້າແລ້ວເວົ້ານຳນາກສອງຕົວນັ້ນວ່າ : ໂດຍອີງໃສ່ຄວາມຮັກແພງຂອງພວກເຈົ້າທັງສອງ, ເຮົາພະຍາແຖນຕົກລົງໃຫ້ສອງເຂືອເຈົ້າແຂ່ງກັນໂດຍຫລີກເວັ້ນຄວາມຮ້າຍແຮງ. ໃຫ້ພວກເຈົ້າເສັງກັນແລ່ນລົງໄປຫາ

Jadis, dans un grand cirque des hautes montagnes d'où sortaient les sources du Mékong et du Mènam, vivaient Savanna Nak et Kusthopha Nak, deux génies ophidiens très liés par une étroite amitié. Souvent, ils se rendaient visite et partageaient le produit de leur chasse.

Bien que Kusthopha fût de nature plus tôt vile et Savanna de nature charitable, il n'avaient eu jusqu'alors aucun différend sérieux et leur amitié était agrémentée très souvent par des festins ou des joutes amicales. Or, un jour une querelle s'éleva entre eux à propos de cadeaux d'inégale valeur. Mais, évitant les manières fortes, les deux *Nak* (génies ou dragons) se mirent d'accord pour porter leur différend devant le *Phaya Thène* (un dignitaire de la cour céleste). Celui-ci intervint et décréta ainsi: «Eu égard aux liens indéfectibles de votre amitié, je vous demande de vous mesurer pacifiquement. Vous allez courir vers la mer. Celui qui arrivera le premier, sera considéré pour moi et par tous les anges du ciel comme vainqueur!» Et les deux *Nak* se mirent aussitôt à exécuter les ordres du *Phaya Thène*.

Kusthopha s'estimant très astucieux et pensant arriver le premier au but, chercha à éviter les obstacles et les difficultés en contournant les forêts et

ທະເລມະຫາສະມຸດ. ຖ້າຜູ້ໃດໄປຮອດກ່ອນ ຜູ້ນັ້ນຈະຖືວ່າເປັນຜູ້ສັດຊື່ ເປັນຜູ້ແບ່ງຂອງຕ້ອນຂອງຂວັນໂດຍທ່ຽງທັມແທ້ ແລະຜູ້ນັ້ນກໍຈະເປັນຜູ້ຊະນະ !

ເມື່ອໄດ້ຍິນດັ່ງນັ້ນແລ້ວ, ນາກສອງຕົວກໍພາກັນທຳຕາມຄຳສັ່ງຂອງພະຍາແຖນ. ກຸດໂທພະນາກ ຄິດວ່າໂຕມີຄວາມສລາດ ແລະຄິດວ່າຈະໄປຮອດທະເລກ່ອນ ກໍມີແຕ່ຂອກຂ່ອງທາງເພື່ອຫລີກເວັ້ນພູຜາ ຫລືບ່ອນໃດທີ່ມີຄວາມຫຍຸ້ງຍາກ. ສ່ວນສວèÌßນາກ ນັ້ນ ກະທຳກົງກັນຂ້າມ : ນາກຕົວນີ້ໄດ້ພົ້ນປ່າດົງຄົງຄະນາ, ຂຶ້ນພູລົງເຫວ ເຊາະຫີນທາງໄປຕາມຫີນພູຜາ ແລ່ນໃຫ້ໄດ້ໄວທ່ໃດແຮ່ງດີ, ໃຊ້ເຫື່ອແຮງອິດເມື່ອຍປານໃດກໍບໍ່ຍອມພັກຍອມເຊົາ. ແຕ່ນາກໂຕນີ້ໂຊກດີ ເພາະມີເທວະບຸດເທວະດາ ຊ່ອຍເຫື່ອ ຊ່ອຍແຮງຂອງມັນໃຫ້ແຮງຂຶ້ນຫລາຍໆເທົ່າ ແລະຊ່ອຍມັນໃຫ້ແພ້ຊະນະພູຜາ ແລະບ່ອນມີຄວາມຫຍຸ້ງຍາກຕ່າງໆ.

ຍ້ອນການແຂ່ງຂັນລະຫວ່າງພະຍານາກສອງໂຕນີ້ແລ້ວ, ຄົນເຮົາທຸກມື້ນີ້ຈຶ່ງເຫັນວ່າມີແມ່ນ້ຳຂອງທີ່ໄຫລລົງທະເລໂດຍຜ່ານພູເຂົາຄົດໂຄ້ງ ແລະປະກອບດ້ວຍແກ້ງຫລາຍໆແຫ່ງ. ສ່ວນແມ່ນ້ຳເຈົ້າພະຍານັ້ນ, ໄຫລຜ່ານທົ່ງ ຜ່ານນາ ທັງນ້ຳກໍໄຫລລົງທະເລໂດຍບໍ່ມີແກ້ງຂັດຂວາງ.

ໃນການແຂ່ງຂັນນັ້ນ, ແມ່ນສວັນນະນາກ ເປັນຜູ້ມາຮອດທະເລກ່ອນ ແລ້ວຖ້າດົນເວລາຈຶ່ງເຫັນ ກຸດໂທພະຍານາກ ມາຮອດ. ພະຍາແຖນເຫັນຜົນການແຂ່ງຂັນເປັນດັ່ງນັ້ນ ຈຶ່ງກ່າວວ່າ : ສວັນນາ ເຮີຍ) ເຈົ້າເປັນຜູ້ແພ້ຊະນະ, ເຈົ້າໄດ້ມາຮອດກ່ອນ ແລະໄດ້ລໍຄອຍເພື່ອນຂອງເຈົ້າຕັ້ງດົນນານ. ເມື່ອເປັນດັ່ງນີ້ແລ້ວ, ແມ່ນ້ຳທີ່ເຈົ້າໄດ້ສ້າງຂຶ້ນມານີ້ຈະຕ້ອງມີຊື່ວ່າ : ນ້ຳຄອງ ຫລືແມ່ໂຂງ ; ໝາຍຄວາມວ່າແມ່ນ້ຳທີ່ລໍຄອຍ ລໍຄອງຖ້າເພື່ອນ. ສ່ວນ ກຸດໂທພະນາກ ນັ້ນ, ເຈົ້າເປັນຜູ້ປລາໄຊ ; ບໍ່ຊະນະ ທັງຍັງໃຫ້ໝູ່ເພື່ອຄອງຖ້າດົນນານ ; ເຫດນັ້ນ, ແມ່ນ້ຳຊຶ່ງເຈົ້າໄດ້ສ້າງຂຶ້ນມານັ້ນຕ້ອງໃຫ້ເອີ້ນວ່າ : ນ້ຳນ ຫລື ແມ່ນ ; ໝາຍຄວາມວ່າແມ່ນ້ຳທີ່ນຳຕາມຫລັງໝູ່ມາ.

Le Mékong prend sa source en Chine, 1200 km au nord de la frontière laotienne. Il arrive à la frontière entre Chine, Laos, Myanmar (Birmanie) et Thaïlande, fait une grande partie de la frontière Laos-Thaïlande, pour traverser ensuite le Cambodge et rejoindre la mer de Chine au sud du Vietnam, après avoir parcouru 4200 km et recueilli les eaux d'un bassin de 800'000 km^2 (plus de trois fois la superficie du Laos, un peu plus que celle du Laos, du Cambodge et du Viet-Nam réunis).

les montagnes. Savanna, au contraire, fraya son chemin à travers montagnes et rochers. Il le fit avec hâte et, grâce à la bienveillance divine, ses forces furent décuplées, ce qui lui permit ainsi de triompher d'obstacles a priori insurmontables.

De cette course entre les deux génies naquit le cours sinueux du Mékong avec ses pentes abruptes et ses nombreux et impressionnants rapides, et le cours du Mènam dont l'eau coule plus doucement à travers les régions de plaine.

Savanna parvint le premier à la mer et attendit longtemps l'arrivée de Kusthopha. *Phaya Thène* intervint et déclara: «Savanna, tu es vainqueur, car tu es parvenu le premier à la mer, et puisque tu as longtemps attendu ton rival, le fleuve que tu as créé s'appellera «Nam Khong» ou «Mékong», c'est-à-dire «le fleuve qui attend». Quant à toi, Kusthopha, tu es vaincu, et puisque tu t'es fait longtemps attendre par ton rival, le fleuve que tu as créé portera le nom de «Nam Nam» ou «Mènam», c'est-à-dire «le fleuve qui suit» ou «le fleuve retardataire».

ໄຟສັນຍານກາສັນຈອນ

ໃນ ການໃຊ້ຣົດເປັນພາຫານະເພື່ອສັນຈອນໄປມາໃນແຕ່ລະວັນນັ້ນ, ນັກຂັບທຸກຄົນເຄີຍພົບກັບບັນຫາຕ່າງໆເຊ່ນ: ອຸປຕິເຫດ ກາງຖນົນ, ບັນຫາຣົດຕິດ, ຄົນຂັບຂີ່ທີ່ຊ່ວງຊີງໂດຍບໍ່ນັບຖືກົດ ຈາຣະຈອນ ຫລືຂັບຣົດໄວເກີນກວ່ານຳນິດ ແລະກໍຍັງມີປະຕິກິຣິຍາອັນບໍ່ ສຸພາບອີກດ້ວຍ. ຈິງຢູ່, ທີ່ບາງຄັ້ງຕຳຣວດຈາຣະຈອນ ແລະ ຣາດາຣ໌ ຕິດຕັ້ງ ຫລືເຄື່ອນທີ່ ໄດ້ທຳໃຫ້ນັກຂັບຂີ່ຜ່ອນຄວາມໄວລົງເລັກນ້ອຍ ອັນນຳໃຫ້ເກີດປ ໂຍດຢ່າງເຫັນໄດ້ກັບຕາ. ຢູ່ຝຣັ່ງເສດ, ນັບຕັ້ງແຕ່ມີ ຣາດາຣ໌ ແລະການ ກວດກາຂອງຕຳຣວດຈາຣະຈອນເພີ່ມຂຶ້ນມານີ້, ຈຳນວນຂອງຜູ້ບາດເຈັບແລະ ຜູ້ເສັຍຊີວິດດ້ວຍອຸປຕິເຫດກາງຖນົນໄດ້ຜ່ອນລົງຫລາຍໆເປີເຊັນຢ່າງໜ້າ ພູມໃຈ. ຣັຖບານຍັງສືບຕໍ່ນະໂຍບາຍປາບປາມເພື່ອຫລຸດຜ່ອນຜູ້ຖືກເຄາະລົງ ໃຫ້ຕ່ຳກວ່າ 5000 ຄົນຕໍ່ປີ.

ນອກຈາກຕຳຣວດຈາຣະຈອນ ແລະ ຣາດາຣ໌ ແລ້ວ, ໄຟສັນຍານຈາຣະ ຈອນຍັງຊ່ອຍໃຫ້ງົດເວັ້ນອຸປະຕິເຫດກາງຖນົນໄດ້ຢ່າງມີຜະສິດທິພາບດີ. ແຕ່ ນັກຂັບຂີ່ຍານພາຫານະທັງຫລາຍຮູ້ບໍເຖິງການກຳເນີດແລະຜູ້ປະດິດໄຟຈາຣະ ຈອນ?

ທີ່ຈິງແລ້ວ, ໄຟສັນຍານຈາຣະຈອນມີຂຶ້ນກ່ອນມີຣົດຍົນແລ່ນຕາມທ້ອງຖ ນົນອີກດ້ວຍ. ໄຟຈາຣະຈອນບ່ອນທຳອິດຂອງໂລກໄດ້ຕິດຕັ້ງຂຶ້ນຢູ່ຖນົນສີ່ ແຍກແຫ່ງນຶ່ງຂອງກຸງ ລອນດອນ ປະເທດ ອັງກິດເມື່ອ ຄ.ສ 1869 ໂດຍມີໄວ້ ເພື່ອປ້ອງກັນບໍ່ໃຫ້ຄົນຍ່າງຖືກມ້າຢຽບເນື່ອງຈາກວ່າສມັຍກ່ອນສ່ວນໃຫຍ່ ແລ້ວ, ໃຊ້ພຽງແຕ່ມ້າ ແລະຣົດມ້າເທົ່ານັ້ນເປັນພາຫານະໃນການສັນຈອນໄປ ມາ.

ຜູ້ປະດິດໄຟຈາຣະຈອນຄົນທຳອິດ ແມ່ນຄົນມີອາຊີບເປັນວິສະວະກັນຣົດ ໄຟ ຊຶ່ງໄດ້ອອກຫົວຄິດສ້າງຂຶ້ນໃນລັກສະນະດຽວກັນກັບໄຟສັນຍານຣົດໄຟ ຂອງຍຸກສມັຍນັ້ນ ຄືໃຊ້ຣາວໄມ້ດຶງລົງ-ຍານຂຶ້ນເພື່ອສັນຍານສຳລັບໃຊ້ໃນ ເວລາກາງເວັນ ແລະມີໂຄມໄຟສີຂຽວແລະສີແດງໃຊ້ ກ໊າສ ເປັນເຊື້ອເພີງ ສຳລັບໃຕ້ໃນເວລາກາງຄືນ (ສີແດງ ໝາຍເຖິງຢຸດ; ສີຂຽວ ໝາຍເຖິງ ຣະວັງ). ຫລັກຂອງເສົາໄຟ ມີຄານໝຸນໂຄມເພື່ອປ່ຽນສັນຍານແລະທິດທາງໃຫ້ກັບຣົດ ມ້າ ຫລືຣົດໄຟ ທີ່ກຳລັງແລ່ນມາ.

ຫລັງຈາກທົດລອງໃຊ້ຣະບົບນີ້ມາໄດ້ບໍ່ນານເທົ່າໃດ, ກ໊າສ ທີ່ໃຊ້ເປັນເຊື້ອ ເພີງນັ້ນກໍລະເບີດຂຶ້ນ ແລະການໃຊ້ໄຟສັນຍານການຈາຣະຈອນຈຶ່ງຖືກຍຸຕິລົງ

Les feux tricolores

Aujourd'hui, nombre d'automobilistes utilisent leur voiture quotidiennement, et affrontent inévitablement les divers problèmes de la circulation : les risques d'accident, les bouchons, les conducteurs qui vous dépassent à toute vitesse sans le moindre respect du code de la route, et qui parfois même se comportent de manière impolie, sans aucune courtoisie... Il est vrai que la présence d'un agent de la police ou de radars fixes ou mobiles poussent les conducteurs à ralentir et à être plus vigilants, que la présence plus marquée de la police et l'augmentation du nombre de radars a eu des effets positifs et tangibles. En France, depuis l'installation récente de nombreux radars et de contrôles de police fréquents, le nombre de blessés et de morts sur les routes a sensiblement baissé. Le gouvernement poursuit cette politique de répression dans l'objectif de ramener le nombre de morts en dessous de la barre des 5000 par an.

Outre la présence des agents de police et des radars, les feux tricolores contribuent efficacement à éviter bien des accidents. Mais sans doute la plupart des automobilistes ignorent-ils l'origine de ces feux tricolores.

En réalité, les feux de signalisation ont été inventés bien avant la voiture en 1869 C'est pour protéger les piétons des chevaux et des charrettes à cheval que les premiers feux ont été installés, dans un carrefour de Londres. C'était en effet un moyen de transport commun à l'époque.

Le premier inventeur des feux de circulation était un ingénieur du chemin de fer qui a imaginé le même principe que la signalisation aux trains, à savoir une barre de bois fixé à une corde pour le faire baisser ou le faire monter (même principe que le barrage de contrôle au Laos) pour signaler la circulation pendant le jour. Pour la nuit, on fixait à cette barre de bois une lampe à gaz de couleur rouge pour le stop, une lampe verte pour passer. Le socle pivotant de la barre permet manuellement de changer la couleur de lampe et la direction de circulation.

ແລະຢຸດສັກໄປດົນນານເກືອບເຖິງ 50 ປີ ຈົນເຖິງປີ ຄ.ສ 1914. ຫລັງຈາກມີການຜະລິດຣົດຍົນອອກມາໃຫ້ແລ່ນໄປມາຕາມທ້ອງຖນົນຢ່າງໄຂ່ຂີນແລ້ວ, ໄຟຈາຣະຈອນຈຶ່ງໄດ້ຖືກຄິດຄົ້ນຂຶ້ນນຳມາໃຊ້ອີກຄັ້ງໃໝ່ ໂດຍຕິດຕັ້ງຢູ່ເມືອງ ຄລິຟແລນ, ຣັດ ໂອໄຮໂອ ປະເທດອະເມຣິກາ. ສັນຍານໄຟທີ່ນຳມາໃຊ້ຄັ້ງໃໝ່ ນີ້ຍັງໃຊ້ສອງສີດັ່ງເດີມຄື: ສີຂຽວ - ໄປ; ສີແດງ ຢຸດ. ໄຟສັນຍານທີ່ມີສາມສີທີ່ ເຮົາຄຸ້ນເຄີຍໃນປັດຈຸບັນນີ້, ໄດ້ຖືກຕິດຕັ້ງເທື່ອທຳອິດຢູ່ນຶວ ຍອກ ໃນປີ 1918.

ເຖິງແມ່ນມີການຄິດຄົ້ນຂຶ້ນມາໃຊ້ຄັ້ງໃໝ່ອີກ ແຕ່ກໍຍັງຕ້ອງການຕຳຣວດ ຈາຣະຈອນປະຈຳຢູ່ຕາມປ້ອມໄຟທີ່ມີລັກສະນະເປັນຫໍຄອຍສູງຢູ່ກາງທາງສີ່ ແຍກທຸກບ່ອນ ເພື່ອເປັນຜູ້ຄວບຄຸມການປ່ຽນສີໄຟສັນຍານ. ຕໍ່ມາຈົນເຖິງປີ ຄ.ສ 1926 ຈຶ່ງມີຜູ້ປະດິດການສັນຍານໄຟຈາຣະຈອນແບບອັດຕະໂນມັດ ຊຶ່ງ ນຳຄວາມສະດວກແລະຄວາມປອດພັຍມາສູ່ພວກເຮົາທີ່ເປັນນັກຂັບຂີ່ຍວດ ຍານພາຫະນະທັງຫລາຍໃນປັດຈຸບັນນີ້.

Peu de temps après avoir expérimenté ce système, le gaz s'explosait fréquemment et on supprime alors ces feux presque pendant cinquante ans jusqu'en 1914. Une fois que l'usine de fabrication des voitures a été fondée, on remédiait alors l'utilisation des feux de signalisation. Les premiers feux ont été installés dans un carrefour de la ville Cliveland, Ohio des Etats-Unis. Cette nouvelle installation ne comprenait toujours les feux bicolores: vert pour passer et rouge pour arrêter. Les premiers feux tricolores ont été inventés et installés à New-York en 1918.

Même avec certaines innovations, ces feux tricolores avaient encore besoin de l'aide manuelle d'un agent de police pour changer le signal dans un poste situé au milieu du carrefour. Ce n'est qu'en 1926 qu'on a réussi à automatiser le fonctionnement de ces feux, qui rendent les carrefours moins dangereux et nous offrent ainsi les plus grands services.

Lors de la sortie d'Eglise Iu-Mien à Aurel (voir p. 34)

ກ້າວສູ່ການກຸ້ມຕົນເອງ

Vers l'autonomie

ສັມພັນຄຣິສຕະຈັກຂ່າວປະເສີດລາວໃນປະເທດຝຣັ່ງເສດ ໄດ້ຕັ້ງຂຶ້ນໃນທ້າຍປີ 1999 ຊຶ່ງທຳອິດປະກອບໄປດ້ວຍສີ່ຄຣິສຕະຈັກທີ່ເຂົ້າຮ່ວມເປັນສະມາຊິກ : ຄຣິສຕະຈັກຂ່າວປະເສີດລາວ-ມົ້ງ ເມືອງ ເຊີວຣັ່ງ (93), ຄຣິສຕະຈັກຂ່າວປະເສີດລາວລວມເຜົ່າເມືອງ ລີອ້ຽ (69), ຄຣິສຕະຈັກຂ່າວປະເສີດ ອິວມຽນ ເມືອງ ອາວີຍ້ອງ (84) ແລະຄຣິສຕະຈັກຂ່າວປະເສີດ ມົ້ງເມືອງ ຣິສເຊີຟ (30). ເມື່ອປີທີ່ຜ່ານມານີ້, ຄຣິສຕະຈັກທີຫ້າໄດ້ສມັກເຂົ້າເປັນສະມາຊິກຕື່ມອີກຄື ຄຣິສຕະຈັກຂ່າວປະເສີດຊາວອາຊີຕາວັນອອກສ່ຽງໃຕ້ ຢູ່ເມືອງ ບວກເຊ (18). ນອກຈາກຄຣິສຕະຈັກທັງຫ້າແຫ່ງທີ່ໄດ້ຈັດຕັ້ງຂຶ້ນເປັນທາງການຕາມກົດໝາຍປີ 1905 ນີ້ແລ້ວ, ກໍຍັງມີກຸ່ມນ້ອຍໆຂອງຊາວຄຣິສຕຽນຂມຸ ຢູ່ເມືອງ ອາແລ ັສ (30), ພີ່ນ້ອງຊາວມົ້ງຢູ່ ຕາຣາເຣ (69), ແຊັງ ເອຕຽນ (42) ແລະ ຊາຕີຍ້ອງ (01) ທີ່ມີການພົວພັນຢ່າງໃກ້ຊິດກັບສັມພັນຄຣິສຕະຈັກຂອງພວກເຮົາອີກດ້ວຍ.

ຄຣິສຕະຈັກທາງການເຫລົ່ານີ້ລ້ວນແລ້ວແຕ່ມີສິດຍາພິບານປະຈຳຢູ່. ນັບຕັ້ງແຕ່ເລີ້ມຕົ້ນຂອງວຽກການໃນຄຣິສຕະຈັກແຕ່ລະແຫ່ງ, ພວກສິດຍາພິບານເກືອບທຸກຄົນ (ຍົກເວັ້ນແຕ່ຢູ່ ອາວີຍ້ອງ) ໄດ້ຮັບການອຸດໜູນເຕັມຈາກອົງການສາສນາຮັບໃຊ້ແຫ່ງ ປະເທດ ສວິສ ທີ່ເຄີຍໄດ້ຣິເຣີ້ມການງານປະກາດຂ່າວປະເສີດຢູ່ປະເທດລາວມາແລ້ວ ນັບຕັ້ງແຕ່ປີ 1902 ເປັນຕົ້ນມາ. ເຖິງແມ່ນວ່າໃນປັດຈຸບັນນີ້, ຄຣິສຕະຈັກທຸກແຫ່ງ ຫາກມີສ່ວນປະກອບເລັກນ້ອຍໃນການອຸດໜູນສິດຍາພິບານກໍຕາມ, ແຕ່ສ່ວນໃຫຍ່ ແລ້ວຍັງແມ່ນອົງການຂອງປະເທດ ສວິສ ເປັນຜູ້ອຸດໜູນມາຢູ່ຢ່າງຕລອດ.

ເພື່ອເປັນການຊຸກຍູ້ໃຫ້ຄຣິສຕະຈັກແຕ່ລະແຫ່ງກາຍມາເປັນຜູ້ເຕີບໃຫຍ່ໄດ້, ທາງອົງການໄດ້ວາງນະໂຍບາຍໃໝ່ ຄືໄດ້ຜ່ອນເງິນອຸດໜູນຜູ້ຮັບໃຊ້ລົງເທື່ອລະນ້ອຍ ເພື່ອໃຫ້ຄຣິສຕະຈັກຄ່ອຍໆເພີ້ມຕື່ມຂຶ້ນໃຫ້. ນອກຈາກນັ້ນແລ້ວ, ທາງອົງການສາສ ນາຮັບໃຊ້ຍັງສົ່ງເສີມໃຫ້ ສັມພັນຄຣິສຕະຈັກລາວ ເອງເປັນຜູ້ບໍຣິຫານເງິນອຸດໜູນ ປະຈຳເດືອນຂອງພວກຜູ້ຮັບໃຊ້ທີ່ທາງອົງການໄດ້ສົ່ງມາໃຫ້ເປັນງວດລະສອງເດືອນ ໂດຍຜ່ານທາງອົງການຄຣິສຕຽນອົງການນຶ່ງຂອງຊາວຝຣັ່ງເສດ. *ຊຶ່ງທຳໜ້າທີ່ເປັນ ເຖົ້າແກ່ຂອງບັນດາອາຈານຊາວອາຊີຂອງພວກເຮົາ ແລະຈົນເຖິງປັດຈຸບັນນີ້, ຄຣິສຕະຈັກຕ່າງໆກໍໄດ້ສົ່ງເງິນອຸດໜູນພວກອາຈານຜ່ານທາງອົງການດັ່ງກ່າວນີ້ຢູ່. ແລະຕາມທີ່ໄດ້ຕົກລົງກັນເນື່ອງໃນກອງປະຊຸມຄັ້ງວັນທີ 21 ພຶສພາ ທີ່ຜ່ານມານີ້, ນັບ ຕັ້ງແຕ່ໄຕຣມາດທີສີ່ຂອງປີ 2005 ນີ້ເປັນຕົ້ນໄປ, ຈະແມ່ນ ສັມພັນຄຣິສຕະຈັກລາວ ເອງທີ່ຈະຕ້ອງຮິບໂຮມເງິນອຸດໜູນພວກອາຈານ ແລະບໍຣິຫານເງິນອຸດໜູນ ທີ່ຈະໄດ້ ຮັບຈາກອົງການ ຂອງປະເທດ ສວິສ ແລ້ວສົ່ງໄປຍັງອົງການຄຣິສຕຽນຂອງຝຣັ່ງເສດ ແຕ່ລະເດືອນຄືເກົ່າເພາະວ່າອົງການຄຣິສຕຽນຂອງຝຣັ່ງເສດຍັງສືບຕໍ່ເປັນເຖົ້າແກ່ ຂອງພວກອາຈານຢູ່ອີກຕໍ່ໄປ.

ເປັນຂອງທັມມະດາຢູ່ນັ້ນເອງທີ່ທຳອິດ, ຄະນະບໍຣິຫານຂອງສັມພັນຄຣິສຕະຈັກ ກໍມີຄວາມຫວາດກົວເລັກນ້ອຍຕໍ່ໜ້າການທ້າທາຍອັນໃຫຍ່ຫລວງຂອງການບໍຣິຫານ

L'Union des Eglises Protestantes Evangéliques Laotiennes a été crée à la fin de 1999. Elle rassemblait au départ quatre Églises: l'Église Évangélique Lao-Hmong de Sevran, l'Église Évangélique Laotienne Pluriethnique de Lyon, l'Église Évangélique Iu-Mienh d'Avignon et l'Église Évangéliqe Hmong de Rochefort du Gard. L'année dernière, une cinquième Église a rejoint l'Union : l'Église Évangélique du Sud-Est-Asiatique de Bourges. En plus de ces cinq Églises, toutes constituées en association loi 1905, nous sommes aussi en relation étroite avec d'autres groupes de chrétiens asiatiques, comme les chrétiens Kmhmu' d'Alès, les Lao-Hmong de Saint-Etienne, les Hmong de Tarare et de Châtillon-sur-Chalaronne.

Chaque Église membre de l'Union a actuellement un pasteur à plein temps, sauf celle Avignon; depuis le début de ces Eglises, ces pasteurs ont été soutenus financièrement par le Service Missionnaire Évangélique, la mission qui a commencé le travail missionnaire au Laos en 1902. Aujourd'hui, chaque Église participe au soutien de son pasteur, mais la majeure partie du soutien vient encore de la mission suisse.

Pour encourager les Églises à devenir adultes, la mission a adopté une nouvelle politique en diminuant petit à petit le soutien du serviteur pour permettre à l'Église de compléter progressivement ce qui manque. En plus, la mission veut aussi encourager notre Union à prendre en charge elle-même la gestion du fonds de soutien des serviteurs asiatiques. Dans le système actuel, la mission envoie ces fonds périodiquement à l'Entente Evangélique, organisme de coordination des CAEF, une famille d'Eglises française, qui centralise les fonds et joue le rôle d'employeur légal de nos pasteurs. Les Eglises envoient également leur participation à cette organisation. Selon la décision prise lors d'une réunion de concertation entre toutes les parties le 21 mai dernier, à partir du dernier trimestre de cette année, ce sera l'Union qui collectera et gérera les fonds pour le soutien des pasteurs, et devra envoyer mensuellement à l'Entente évangélique le montant nécessaire pour les salaires et les charges, cette dernière continuant à assumer le travail administratif d'employeur légal.

Il est normal qu'au début, le comité de l'Union éprouve certaines craintes face au grand

ນີ້ ເພາະສ່ວນມາກໃຜໆກໍຍັງຂາດປະສົບປະການທາງດ້ານການບໍຣິຫານ ແລະດ້ານເອກກະສານຕ່າງໆນີ້ຢູ່. ແຕ່ຫາກວ່າພວກເຮົາຍອມຮັບເອົາພາຣະອັນໜັກນີ້ດ້ວຍອາສັຍປະສົບປະການຂອງຜູ້ທີ່ຄຸ້ນເຄັຍເຮັດມາກ່ອນແລ້ວທີ່ສັນຍາວ່າຈະໃຫ້ຄວາມຮ່ວມໄມ້ຮ່ວມມືຊ່ວຍເຫລືອແນະນຳ ແລະດ້ວຍການເພິ່ງສະຕິປັນຍາຂອງພຣະຜູ້ເປັນເຈົ້າ ອົງຊົງຣິດຮ້ອງໃຫ້ພວກເຮົາທຸກຄົນເຂົ້າມາຮັບໃຊ້ພຣະອົງໃນດ້ານໃດດ້ານນຶ່ງຕາມຄຸນວຸດທິຂອງແຕ່ລະຄົນ.

ກິຈກັມຕ່າງໆອັນເປັນທີ່ປະຈັກຕາຂອງສັມພັນຄຣິສຕະຈັກລາວເພື່ອອູ້ມຊູຄວາມເຊື່ອຂອງຄຣິສຕະສາສນິກະຊົນທຸກເຜົ່າທີ່ເປັນສະມາຊິກກໍຄື : ການຝຶກອົບຮົມປີລະສອງຄັ້ງ, ການຟື້ນຟູຄອບຄົວປະຈຳປີ, ການສັມມະນາພວກຄົນໜຸ່ມທີ່ເຣີ້ມສ້າງຊີວິດໃໝ່ ໂດຍການເຊື້ອເຊີນເອົານັກຊ່ຽວຊານຊາວຝຣັ່ງເສດມາເປັນນັກວິທຍາກອນ.

ກິຈກັມອັນສຳຄັນພາກສ່ວນນຶ່ງອີກຂອງສັມພັນຄຣິສຕະຈັກລາວກໍຄືການສົ່ງເສີມເຍົາວະຊົນໃຫ້ຕັ້ງເປັນກ້ອນກຸ່ມເພື່ອຊ່ວຍເຫລືອຊຶ່ງກັນແລະກັນໃຫ້ຮູ້ຈັກພຣະເຈົ້າ ແລະມອບຄວາມເຊື່ອໄວ້ວາງໃຈໃນພຣະອົງ. ຈຸດເປົ້າໝາຍອັນພິເສດຂອງພໍ່ແມ່ຄຣິສຕຽນກໍຄືຢາກໃຫ້ພວກຄົນລຸ້ນຫລັງດຳເນີນຊີວິດໃນເສັ້ນທາງອັນສັດຊື່ແລະຊອບທັມຂອງພຣະຜູ້ເປັນເຈົ້າ. ນອກຈາກນັ້ນແລ້ວ, ຍັງຢາກຈະເຫັນພວກເຂົາຍົກທຸງໄຊແຫ່ງຄວາມເຊື່ອອັນເປັນມໍຣະດົກທີ່ພວກພໍ່ແມ່ໄດ້ຖ່າຍທອດໃຫ້ນີ້ໃນທ່າມກາງເພື່ອຮ່ວມຊາດຊຶ່ງເປັນຄົນລຸ້ນລາວຄາວດຽວກັນກັບພວກເຂົາອີກດ້ວຍ. ໄດ້ຫລາຍປີມາແລ້ວທີ່ພວກເຍົາວະຊົນຄຣິສຕຽນຊາວອາຊີໄດ້ຈັດຕັ້ງກັນຂຶ້ນເປັນສະມາຄົມຊື່ວ່າ *ສະມາຄົມ ຊາວໜຸ່ມຄຣສຕຽນອາຊີ* ທີ່ມີບົດບາດສຳຄັນໃນທ່າມກາງແວດວົງຂອງຊາວຄຣິສຕຽນຝ່າຍຂ່າວປະເສີດທຸກໆຊົນຊາດຊົນເຜົ່າໃນປະເທດຝຣັ່ງເສດ. ພວກເຂົາໄດ້ຈັດຕັ້ງການຟື້ນຟູປະຈຳປີ, ການຝຶກອົບຮົມຫລາຍໆຄັ້ງໃນທ້ອງປີ ແລະການພົບປະສ້າງສັນກັນລະຫວ່າງຊາວໜຸ່ມຂອງຄຣິສຕະຈັກຕ່າງໆອີກດ້ວຍ.

ກ່ອນ ສັມພັນຄຣິສຕະຈັກລາວ ຈະຢັ້ງຢືນແລະດຳເນີນງານຕໍ່ໄປໄດ້ໃນອະນາຄົດກໍຈຳເປັນຕ້ອງອາສັຍພັຍເພິ່ງພໍ່ແມ່ພີ່ນ້ອງທີ່ເຊື່ອໝົດທຸກຜູ້ທຸກຄົນໃນການອະທິຖານເພື່ອຄະນະບໍຣິຫານ, ໃນການປະກອບສ່ວນບໍ່ວ່າແຕ່ທາງດ້ານກຳລັງຊັບຫລືດ້ານການໃຫ້ກຳລັງໃຈກໍດີ. ບໍ່ດັ່ງນັ້ນແລ້ວ, ຍ້ານວ່າການງານທີ່ພວກເຮົາໄດ້ພາກັນລິເລີ້ມຂຶ້ນດ້ວຍຄວາມມານະອົດທົນ ແລະຄວາມເສັຍສະລະເພື່ອພຣະເຈົ້າໃນທ່າມກາງເພື່ອນຮ່ວມຊາດຂອງພວກເຮົານັ້ນຈະກ້າວໄກອອກໄປບໍ່ໄດ້ເລີຍ. ຖ້າຫາກເປັນດັ່ງນີ້ແລ້ວ, ບໍ່ພຽງແຕ່ຊື່ສຽງລຽງນາມຂອງຊາວຄຣິສຕຽນລາວເຮົາເທົ່ານັ້ນທີ່ຈະຖືກເຍີ້ຍຫຍັນຈາກຜູ້ທີ່ບໍ່ທັນໄດ້ຮູ້ຈັກກັບພຣະເຈົ້າ, ແມ່ນແຕ່ກຽດແລະຊື່ສຽງຂອງພຣະອົງເອງກໍຈະຂາດຄວາມເຄົາຣົບນັບຖືເຊ່ນດຽວກັນ. *ຄວາມປາຖນາຂອງພວກຂ້າພະເຈົ້າແລ້ວກໍຄືຢາກໃຫ້ ສັມພັນຄຣິສຕະຈັກລາວສາມາດຕອບສນອງຕໍ່ຄຳຮຽກຮ້ອງຂອງພຣະເຈົ້າຢ່າງເຕັມປ່ຽມໃນການບົວຣະບັດຮັບໃຊ້ແລະໃນການເປັນພະຍານເຖິງຄວາມຮັກຂອງພຣะອົງໃນທ່າມກາງເພື່ອນຮ່ວມຊາດຂອງພວກເຮົາທຸກທົ່ວໜ້າ.

défi de gestion et d'administration qui est devant lui, car la plupart d'entre nous n'ont guère d'expérience dans ce domaine. Mais nous acceptons cette lourdes charges en comptant sur l'aide de personnes expérimentées qui nous ont promis de nous appuyer de leurs conseils et de nous donner la formation nécessaire. Nous comptons surtout sur l'aide et sur la sagesse de Dieu, qui nous a appelés à le servir en mettant en oeuvre les dons qu'il a donnés chacun dans son domaine spécifique et selon ses capacités propres.

Les activités concrètes de l'Union depuis sa création sont diverses: des rencontre de formation chrétienne deux fois par année, un camp de familles en été, l'organisation de séminaires pour les jeunes couples en invitant des orateurs différents selon le thème à traiter.

Une des activités essentielles de l'Union est d'encourager la jeunesse à s'organiser et à s'entraider pour découvrir la foi. Notre désir, en tant que parents, c'est de voir nos enfants marcher dans le droit chemin de Dieu. Nous aimerions voir également nos enfants relever l'étendard de la foi qui constitue pour eux notre seul héritage, parmi leurs compatriotes contemporains. Voici déjà un six ans déjà que notre jeunesse chrétienne laotienne de France s'est constituée en association sous le nom de JCA («Jeunesse Chrétienne Asiatique»), une association qui joue un rôle important dans le cercle des chrétiens évangéliques de France en général. Leurs activités principales sont l'organisation du camp de jeunes d'été, la formation des responsables de jeunesse, des sorties en week-end et des rencontres inter-jeunes au niveau local et national.

Pour pouvoir continuer son ministère, l'Union a besoin de soutien spirituel et financier de vous tous dans son action. Sinon, nous risquons de ne pas pouvoir poursuivre l'oeuvre de Dieu commencée parmi nos compatriotes en France depuis bientôt trois décennies. Dans ce cas, non seulement la réputation ou l'honneur des chrétiens laotiens serait méprisée, mais c'est l'honneur et la gloire de Dieu lui-même qui seraient déshonorés parmi les gens de notre peuple qui ne le connaissent pas encore. Notre prière est que notre Union puisse répondre pleinement à sa vocation de service et de témoignage parmi nos compatriotes en France.

ການອອກທ່ຽວຂອງຄຣິສຕະຈັກ

ຄຣິສຕະຈັກ ອີວມ່ຽນ ທີ່ເມືອງ ອາວີຍົງ, ອຈ ບຸນມີ

ຫລັງ ອອກທ່ຽວທ້າຍສັບປະດາຂອງ ຄຣິສຕະຈັກເມື່ອ ປີກາຍນີ້ຢູ່ເມືອງ ຊຸຍແມນ (34), ປີນີ້ພວກເຮົາ ໄດ້ພາກັນອອກໄປທ່ຽວອີກຢູ່ຜາສາດ ກູຕເຣ ຢູ່ໃກ້ເມືອງ ໂອແຣນ ແຂວງ 84. ຜາສາດແຫ່ງນີ້ຊຶ່ງຕັ້ງຢູ່ເທິງຫລັງພູໄດ້ຈັດໄວ້ໃຫ້ເປັນສະຖານທີ່ພັກ ຮ້ອນ ແລະມີທິວທັດອັນສວຍງາມຫລາຍ.

ພວກເຮົາໄດ້ພາກັນໄປເຖິງສະຖານທີ່ໃນມື້ວັນສຸກຕອນແລງ ໂດຍ ພາກັນເລີ້ມຮັບປະທານອາຫານຄ່ຳຊຶ່ງແຕ່ລະຄອບຄົວໄດ້ຈັດຕຽມໄປແຕ່ ບ້ານ ແລະໄດ້ພາກັນກັບຄືນບ້ານໃນຕອນບ່າຍຂອງວັນອາທິດຫລັງຈາກທີ່ ໄດ້ກິນປີ້ງຊີ້ນຢ່າງແຊບນ້ຳກັນແລ້ວ.

ຕອນຄ່ຳຂອງວັນສຸກເປັນເວລາທີ່ສຽວນໄວ້ສຳລັບທານຫລິ້ນເກມ ຕ່າງໆເຊ່ນ: ຫລິ້ນໄພ້, ຫລີຫລິ້ນແນວອື່ນໆ ວັນເສົາຕອນເຊົ້າ ເປັນເວລາ ຫວ່າງ ແລະຕອນບ່າຍກໍແມ່ນການຫລິ້ນກິລາຕີບານສຳລັບຜູ້ມັກກິລາ, ຫລິ້ນໂລໂຕ ສຳລັບພວກເດັກນ້ອຍແລະແມ່ເຮືອນ, ນອນເວັນຫລີ່ຍໆ ຫລິ້ນສຳລັບຜູ້ມັກໃຊ້ຄວາມຄິດ. ນອກນັ້ນ, ສ່ວນພວກພໍ່ເຮືອນຍັງມີໜ້າທີ່ ຈັດການປະຊຸມພິເສດຕອນຄ່ຳໂດຍການຄົ້ນຄິດຫາເກມຕ່າງໆທີ່ຈະໃຫ້ທັງ ເດັກແລະຜູ້ໃຫຍ່ປະກອບສ່ວນນ້ຳກັນໄດ້. ເປັນເວລາຫລິ້ນມ່ວນຊື່ນ ຫລາຍ ແລະທຸກຄົນພາກັນຫົວຈົນທ້ອງແຫ້ງ!

ວັນອາທິດຕອນເຊົ້າ, ພວກເຮົາໄດ້ໂຮມກັນເພື່ອນະ ມັສການພຣະເຈົ້າດ້ວຍການ ຂາບໄຫວ້ແລະການສັນຣະ ເສີນ. ຄຳເທສນາໄດ້ພາດຫົວ ເຣື້ອງວ່າ: ຂ້ານ້ອຍເປັນຜູ້ຖືກ ເນຣະມິດອັນປະເສີດຂອງ ພຣະເຈົ້າ.

ຫລັງຈາກນັ້ນແລ້ວ, ພວກ ເຮົາກໍໄດ້ສົນທະນາກັນເຖິງຈຸດ ເປົ້າໝາຍຂອງການອອກທ່ຽວ

Sortie d'Eglise à Aurel

Pasteur Bounmy Sely

Après le week-end de sortie d'Eglise enrichissante à Sumène dans le Gard l'année passée, les 3-4-5 juin 2005 nous avons pu renouveler cette expérience au château de Coudray près d'Aurel dans le Vaucluse. C'est un Centre de Vacances en pleine montagne avec un paysage magnifique.

Arrivés le vendredi soir avec le repas tiré des sacs, nous sommes repartis le dimanche après-midi après une bonne grillade.

Le vendredi soir était consacré à différents jeux : cartes, jeux de société… Le samedi matin était libre et l'après-midi consacrée au volley-ball pour les plus sportifs, au loto pour les enfants et les mamans, à la promenade ou à la sieste pour les plus pensifs. Les papas avaient entre autres la charge d'organiser la soirée spéciale consacrée à divers jeux où destinés à faire participer les petits comme les grands. Qu'est ce qu'on a bien rigolé !

Le dimanche matin nous nous sommes rassemblés pour le culte d'adoration et de louange à notre Dieu. Le thème du message était : « Je suis une créature merveilleuse ».

Ensuite nous nous avons réfléchi ensemble à la vraie raison d'être de notre week-end. Que sommes-nous venus faire ? Nous reposer ou dormir tranquillement? Sîrement pas ! En fait, la plupart d'entre nous n'ont pas beaucoup dormi durant ces deux nuits, et pourtant tout le monde était bien content.

Un tel week-end est une autre façon de nous rencontrer entre frères et sœurs, petits et grands, en dehors du cadre habituel de nos réunions hebdomadaires, et nous encourageons vivement d'autres communautés à faire la même expérience.

ໃນວັນທ້າຍສັບປະດາ. ພວກເຮົາ ພາກັນມາເຮັດຫຍັງຢູ່ທີ່ນີ້? ພວກ ເຮົາມາເພື່ອນອນແລະເພື່ອ ພັກຜ່ອນຢ່າງສະບາຍເທົ່ານັ້ນບໍ? ພວກເຮົາບໍ່ຄິດວ່າເປັນແນວນັ້ນ ດອກ ເພາະວ່າພວກເຮົາສ່ວນ ມາກແລ້ວກໍບໍ່ໄດ້ນອນຢ່າງເຕັມ ເມັດເຕັມໜ່ວຍພາຍໃນສອງຄືນນີ້ ແຕ່ເຖິງປານນັ້ນ, ແຕ່ລະຄົນກໍດີ ອົກດີໃຈຫລາຍ.

ການອອກທ່ຽວຢ່າງນີ້ ເປັນ ປະສົບປະການແນວໃໝ່ນອກຈາກ ແວດວົງຂອງການປະຊຸມແບບ ປົກກະຕິພາຍໃນກາງອາທິດຢູ່ທີ່ວິຫານຂອງພວກເຮົາ. ການອອກໄປແບບ ນີ້ຍັງເປັນໂອກາດເພື່ອພົບກັນແລະທຳຄວາມຮູ້ຈັກກັນລະຫວ່າງພີ່ນ້ອງທີ່ ເຊື່ອທັງເດັກແລະຜູ້ໃຫຍ່ໃຫ້ດີຂຶ້ນກວ່າເກົ່າ. ສະນັ້ນ, ພວກຂ້າພະເຈົ້າຈຶ່ງຂໍ ສນັບສນູນໃຫ້ຄຣິສຕະຈັກອື່ນໆຈົ່ງລອງມີປະສົບປະການແບບດຽວກັນກັບ ພວກຂ້າພະເຈົ້ານີ້.

Carnet de famille

ຂ່າວການເກີດ

♡ ດຍ ເມໂລດີ ວິໄລສອນ ເກີດເມື່ອວັນທີ 26 ເມສາ 2005 ໃນຄອບຄົວ ຂອງ ຄັນທະໄວ ແລະ ບຸນທະວີ ສຸກກະເສນ ທີ່ເມືອງ ລີອົງ.

♡ ດຊ ເຊດຣິກ ເກີດວັນທີ 8 ພຶສພາ (05) ໃນຄອບຄົວຂອງ ສ້ານຈ້ອຍ ແລະ ໂຊ ແສ້ພ່ານ ທີ່ເມືອງ ອາວີຍົງ.

♡ ດຊ ແລນນີ ເກີດວັນທີ 9 ເດືອນ ມີຖຸນາ (6) 2005 ໃນຄອບຄົວຂອງ ໂຢຮັນ ແລະ ຊຸຍລີ ໂອໄຣເຢ ທີ່ເມືອງ Fontvieille (13).

Naissances

♡ La petite **Mélodie-Vilaysone** est née le 26 avril 2005 à Lyon (69) chez Khanthavay et Bounthavy Soukkaséne.

♡ Le petit **Cédric** est né le 08 mai 2005 à Avignon (84) chez Sanh Choy et Dzo Sèphane.

♡ Le petit **Lenny** est né le 09 juin 2005 à Fontvieille (13) chez Yoann et Julie Aureille.

ການແຕ່ງງານ

♡ ລະຫວ່າງ ນສ ໄມຢີ ມົວນູຕົວ ກັບ ທ. ໂທມາ ສິປຣະເສີດ ຈະໄດ້ຈັດ ໃຫ້ມີຂຶ້ນໃນວັນທີ 09.07.05 ທີ່ເມືອງ ແຊ້ງດູນຊາ (18).

Mariage

♡ **May Yi Moua Nou Toua** et **Thomas Sypraseuth** célébreront leur mariage le 9 juillet 2005 à Saint-Doulchard (18).